# ຖະແຫຼງການວຽງຈັນ ວ່າດ້ວຍຄູ່ຮ່ວມມື

# ເພື່ອການຮ່ວມມືໃນການພັດທະນາທີ່ມີປະສິດທິຜົນ

*ເລັ່ງລັດການພັດທະນາແບບຍືນຍົງໂດຍຜ່ານການເພີ້ມທະວີການຮ່ວມມື*

**(2026–2035)**

**ວັນທີ 19 ພະຈິກ 2025**

# ຖະແຫຼງວຽງຈັນ ສະບັບທີ່ III ( 2025–2035 )

*ເລັ່ງລັດການພັດທະນາແບບຍືນຍົງໂດຍຜ່ານການເພີ່ມທະວີການຮ່ວມມື*

## I. ອະລຳພະບົດ.

1. ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ບັນດາຄູ່ຮ່ວມພັດທະນາ ທີ່ປະຊຸມກັນຢູ່ ນະຄອນຫຼວງວຽງຈັນ ໃນປີ 2025, ຢືນຢັນຄຳໝັ້ນສັນຍາຮ່ວມກັນເພີ່ມທະວີການຮ່ວມມືເພື່ອການພັດທະນາ ເຊິ່ງເປັນຈຸດໝາຍສຳຄັນໃນ ເສັ້ນທາງພັດທະນາປະເທດຊາດ.

2. ເມື່ອພວກເຮົາທົບທວນຄືນການຄູ່ຮ່ວມມືໃນໄລຍະ 2 ທົດສະວັດ ໂດຍຜ່ານຂອບແຜນງານຖະແຫຼງການວຽງຈັນ, ພວກເຮົາຮັບຮູ້ວ່າ ສປປ ລາວ ຢືນຢູ່ໃນຈຸດປ່ຽນແປງໃໝ່ ໂດຍມີສາມໄລຍະການຫັນປ່ຽນ. ກ່ອນອື່ນໝົດ, ໃນຂະນະທີ່ພວກເຮົາໄດ້ສະຫລຸບຄືນ ກ່ຽວກັບ ຖະແຫຼງການວຽງຈັນວ່າດ້ວຍການເປັນຄູ່ຮ່ວມເພື່ອການພັດທະນາຢ່າງມີປະສິດທິຜົນ (2016–2025), ພວກເຮົາຖອດຖອນບົດຮຽນອັນລ້ຳຄ່າຈາກປະສົບການຮ່ວມກັນຂອງພວກເຮົາເພື່ອຍົກສູງປະສິດທິຜົນການພັດທະນາ. ສອງ, ພວກເຮົາປະເຊີນໜ້າກັບການປ່ຽນແປງຂັ້ນພື້ນຖານຮູບແບບການພັດທະນາໃນທົ່ວໂລກ ທີ່ພວມປັບປຸງການພົວພັນດ້ານການຊ່ວຍເຫຼືອແບບດັ້ງເດີມ ແລະ ແນະນຳກາລະໂອກາດໃໝ່ໃນການຮ່ວມມື. ສາມ, ຄວາມຄືບໜ້າຂອງພວກເຮົາທີ່ກ້າວໄປສູ່ການຫຼຸດພົ້ນອອກຈາກ ສະຖານະພາບ ຂອງປະເທດດ້ອຍພັດທະນາ (LDC) ເປັນສັນຍານທັງຄວາມສຳເລັດ ແລະຄວາມຕ້ອງການໃນການຄຸ້ມຄອງສິ່ງທ້າທາຍໃໝ່.

3. ເສັ້ນທາງຈາກຖະແຫຼງການວຽງ ສະບັບທີ່ 1 ວ່າດ້ວຍປະສິດທິພາບຂອງການຊ່ວຍເຫຼືອໃນປີ 2006 ຫາ 2015 ເຊິ່ງເປັນໄລຍະກ່ອນການຈັດຕັ້ງປະຕິບັດຖະແຫຼງການວຽງຈັນ ສະບັບທີ່ 2 ວ່າດ້ວຍການເປັນຄູ່ຮ່ວມການພັດທະນາທີ່ມີປະສິດທິຜົນ (2016–2025) ໂດຍສຸມໃສ່ການຮ່ວມມື ແລະ ຜົນປະໂຫຍດຮ່ວມກັນ, ເປັນໜຶ່ງຮູບແບບໃນການຮຽນຮູ້ ແລະ ປັບຕົວຢ່າງຕໍ່ເນື່ອງ. ກອງປະຊຸມປຶກສາຫາລືເພື່ອທົບທວນການປະເມີນການຈັດຕັ້ງປະຕິບັດວຽກງານຕິດຕາມປະສິດທິຜົນຂອງການຮ່ວມມືເພື່ອການພັດທະນາໃນລະດັບສາກົນ (GPEDC) ຄັ້ງທີ 4 ໄດ້ສຳເລັດໃນປີ 2024 ໄດ້ໃຫ້ຂໍ້ສັງເກດວ່າປະສິດທິຜົນຂອງການຮ່ວມມືດ້ານການພັດທະນາຂອງ ສປປ ລາວ ໄດ້ຍົກໃຫ້ເຫັນຍຸດທະສາດການເພີ່ມທະວີການມີສ່ວນຮ່ວມຂອງທຸກພາກສ່ວນທີ່ກ່ຽວຂ້ອງ, ເພີ່ມທະວີຄວາມເປັນເຈົ້າການຂອງປະເທດໂດຍການຕິດຕາມກວດກາຂອງສະພາສະແຫ່ງຊາດ, ປັບປຸງການວາງແຜນພັດທະນາແຫ່ງຊາດ ແລະ ສົ່ງເສີມສະພາບແວດລ້ອມທີ່ເອື້ອຍອຳນວຍແກ່ອົງການຈັດຕັ້ງທາງສັງຄົມ. ພ້ອມນັ້ນ, ຜົນການທົບທວນຄັ້ງສຸດທ້າຍຂອງແຜນການດຳເນີນງານຂອງຖະແຫຼງການວຽງຈັນ VDCAP ໃນປີ 2024 ຊີ້ໃຫ້ເຫັນຄວາມຄືບໜ້າອັນສຳຄັນໃນການວາງແຜນພັດທະນາ, ຄວາມສອດຄ່ອງຂອງຄູ່ຮ່ວມມື ແລະ ກົນໄກຄວາມຮັບຜິດຊອບ. ເພື່ອສ້າງຄວາມສຳເລັດເຫຼົ່ານີ້, ມັນເປັນສິ່ງຈຳເປັນທີ່ຈະແກ້ໄຂສິ່ງທ້າທາຍຢ່າງຕໍ່ເນື່ອງທີ່ກ່ຽວຂ້ອງກັບການຄາດຄະເນຈາກຫຼາກຫຼາຍແຫຼ່ງທຶນ, ການມີສ່ວນຮ່ວມຂອງທຸກພາກສ່ວນທີ່ກ່ຽວຂ້ອງ, ການສ້າງຄວາມເຂັ້ມແຂງໃຫ້ລະບົບການຄຸ້ມຄອງການເງິນພາກລັດ (PFM) ດ້ວຍການຈັດຕັ້ງປະຕິບັດຂໍ້ສະເໜີແນະດັ່ງກ່າວ, ສປປ ລາວ ສາມາດກ້າວໄປສູ່ຂອບການຮ່ວມມືດ້ານການພັດທະນາທີ່ມີປະສິດຕິຜົນ ແລະ ຮອບດ້ານທີ່ຕອບສະໜອງຄວາມຕ້ອງການຂອງປະຊາຊົນໄດ້ດີຂຶ້ນກ່ວາເກົ່າ ແລະ ສອດຄ່ອງກັບເປົ້າໝາຍການພັດທະນາໃນທົ່ວໂລກ.

DRAFT

4. ຜ່ານຂະບວນການໂຕະມົນ, ພວກເຮົາໄດ້ຊຸກຍູ້ການປຶກສາຫາລືທີ່ມີຄວາມໝາຍ ແລະ ເພີ່ມທະວີການປະສານງານລະຫວ່າງລັດຖະບານ ແລະ ຄູ່ຮ່ວມມືພັດທະນາ. ຖະແຫຼງການວຽງຈັນ ສະບັບທີ່ 2 ຂອງພວກເຮົາໃນປີ 2015 ໄດ້ເປີດກວ້າງວິໄສທັດຂອງພວກເຮົາເພື່ອຮັບເອົາການພົວພັນຄູ່ຮ່ວມມືແບບດັ່ງເດີມ ແລະ ການຮ່ວມມືພັດທະນາທີ່ຫຼາກຫຼາຍຮູບແບບ. ການປ່ຽນແປງນີ້ສະທ້ອນໃຫ້ເຫັນເຖິງຄວາມເຂົ້າໃຈທີ່ເພີ່ມຂຶ້ນຂອງພວກເຮົາວ່າການຮ່ວມມືດ້ານການພັດທະນາທີ່ມີປະສິດທິຜົນຮຽກຮ້ອງໃຫ້ ການມີສ່ວນຮ່ວມຢ່າງຫ້າວຫັນຂອງທຸກພາກສ່ວນທີ່ກ່ຽວຂ້ອງເຊັ່ນ : ລັດຖະບານ, ຄູ່ຮ່ວມພັດທະນາ, ອົງການຈັດຕັ້ງທາງສັງຄົມ, ພາກສ່ວນເອກະຊົນ, ນັກວິຊາການ, ແລະອື່ນໆ. ກົນໄກຫຼັກເພື່ອສົ່ງເສີມທີ່ມີສ່ວນຮ່ວມຂອງທຸກພາກສ່ວນທີ່ກ່ຽວຂ້ອງນີ້ ແມ່ນ ເຮັດວຽກຂອງໜ່ວຍງານຂະແໜງການ (SWGs) ພາຍໃນຂະບວນການໂຕະມົນ (RTP). ບັນດາໜ່ວຍງານຂະແໜງການເຫຼົ່ານີ້ໄດ້ຊ່ວຍໃຫ້ພາກສ່ວນກ່ຽວຂ້ອງທີ່ຫຼາກຫຼາຍສາມາດຮ່ວມມືກັນຢ່າງມີປະສິດທິພາບຫຼາຍຂຶ້ນຕໍ່ກັບສິ່ງທ້າທາຍດ້ານການພັດທະນາ, ຮັບປະກັນວ່າທັດສະນະ ແລະ ຄວາມຊ່ຽວຊານຕ່າງໆໄດ້ຖືກລວມເຂົ້າໃນຂະບວນການວາງແຜນ ແລະ ການຈັດຕັ້ງປະຕິບັດຂອງພວກເຮົາ.

### ສະພາບປັດຈຸບັນ ແລະ ສິ່ງທ້າທາຍ (2025)

5. ສປປ ລາວ ກຳລັງປະເຊີນໜ້າກັບສິ່ງທ້າທາຍ ແລະ ໂອກາດ, ສະຖານະການຂອງໂລກຜັນແປໄປຕາມຄວາມບໍ່ແນ່ນອນຂອງເສດຖະກິດ ແລະ ຂໍ້ຂັດແຍ່ງດ້ານພູມສັນຖານທີ່ຕິດພັນກັບການເມືອງ ໂດຍສະເພາະແມ່ນຜົນກະທົບຕໍ່ເສດຖະກິດ ຂອງປະເທດທີ່ກຳລັງພັດທະນາ. ຄາດຄະເນການຊ່ວຍເຫຼືອລ້າ (OECD ODA)ຈະຫຼຸດລົງປະມານ 11–20% ຈາກປີ 2024 ຫາ 2027 ເຊິ່ງຈຳເປັນຕ້ອງໄດ້ທົບທວນຄືນຍຸດທະສາດການສະໜອງທຶນຂອງພວກເຮົາ. ດ້ວຍທ່າອ່ຽງທີ່ຫຼຸດລົງນີ້, ຜົນການເກັບກຳຂໍ້ມູນ ທີ່ການຊ່ວຍເຫຼືອລ້າແກ່ ສປປ ລາວ ໄດ້ມີການຄາດຄະເນ 600 ລ້ານຕໍ່ປີ ຈະໄດ້ຮັບການທົບທວນຄືນໃນໄລຍະການຮ່ວມມືພັດທະນາ ໃໝ່ 2026–2035. ການປ່ຽນແປງຂອງດິນຟ້າອາກາດ ແມ່ນບັນຫາທີ່ສຳຄັນ ໂດຍ ສປປ ລາວ ໄດ້ປະສົບກັບເຫດການປ່ຽນແປງດິນຟ້າອາກາດທີ່ຮ້າຍແຮງຂຶ້ນເລື້ອຍໆ ແລະ ສົ່ງຜົນກະທົບຕໍ່ວຽກງານກະສິກຳ ແລະ ໂຄງລ່າງພື້ນຖານ. ໂຄງສ້າງພື້ນຖານດ້ານເຕັກໂນໂລຢີທີ່ພັດທະນາຢ່າງໄວວາ ໄດ້ນຳມາເຊິ່ງໂອກາດ ທີ່ຈະທ້າທາຍໃນການພັດທະນາແບບກ້າວກະໂດດ ແລະຄວາມສ່ຽງຂອງຄວາມແຕກຕ່າງ ລະຫວ່າງ ຄົນກຸ່ມຄົນໃນສັງຄົມທີ່ເຂົ້າເຖິງ ດິຈິຕອລ.

6. ສປປ ລາວ ກຳລັງກະກຽມ ຫຼຸດພົ້ນອອກ ຈາກສະຖານະພາບປະເທດດ້ອຍພັດທະນາ ເຊິ່ງມີທັງໂອກາດ ແລະ ສິ່ງທ້າທາຍ. ການສຶກສາລ້າສຸດໂດຍສູນການຄ້າສາກົນຄາດຄະເນການສົ່ງອອກຂອງ ສປປ ລາວ ຮອດປີ 2027. ການສຶກສາດັ່ງກ່າວສະແດງໃຫ້ເຫັນວ່າ ສປປ ລາວ ຈະສົ່ງອອກ 10 ຕື້ໂດລາ ໃນປີ 2027 ຖ້າຍັງຄົງຢູ່ໃນສະຖານະ LDC, ແຕ່ຈະເປັນ 9.3 ຕື້ ໂດລາ ສະຫະລັດ ຖ້າປະເທດ ສປປ ລາວ ອອກຈາກປະເທດ LDC ຈະບໍ່ໄດ້ຮັບນະໂຍບາຍພາສີຂາເຂົ້າຈະເຮັດໃຫ້ການສົ່ງອອກຂອງ ສປປ ລາວຫຼຸດລົງ 734 ລ້ານ ໂດລາ ສະຫະລັດ. ໃນຂະນະທີ່ການຫຼຸດພົ້ນຈາກສະຖານະພາບປະເທດດ້ອຍພັດທະນານັ້ນ ສະແດງໃຫ້ເຫັນເຖິງຄວາມກ້າວຫນ້າໃນການພັດທະນາ ແຕ່ປະເທດກໍ່ຈະສູນເສຍຜົນປະໂຫຍດ ຈາກການໄດ້ຮັບການຊ່ວຍເຫຼືອເພື່ອການພັດທະນາ (ODA). ການທີ່ ສປປ ລາວ ໄດ້ຫຼຸດພົ້ນອອກຈາກສະຖານະການ LDC ບໍ່ໄດ້ຄາດວ່າຈະມີການປ່ຽນແປງການຮ່ວມມືດ້ານການພັດທະນາທີ່ປະເທດຈະໄດ້ຮັບ. ODA ຂອງ ສປປ ລາວ ສ່ວນໃຫຍ່ ແມ່ນມາຈາກສະມາຊິກ OECD–DAC ແລະ ການຮ່ວມມືແບບໃຕ້-ໃຕ້ (South–south Cooperation) ຊຶ່ງບໍ່ໜ້າຈະໄດ້ຮັບຜົນກະທົບຫຼາຍຈາກການຫຼຸດພົ້ນອອກຈາກສະຖານະປະເທດດ້ອຍພັດທະນາ. ເຖິງຢ່າງໃດກໍ່ຕາມ, ມີການຄາດການການປ່ຽນແປງບາງຢ່າງ ໂດຍສະເພາະເງິນກູ້ດອກເບ້ຍຜ່ອນຜັນ ແລະ ການເຂົ້າເຖິງແຫຼ່ງທຶນສະເພາະຂອງປະເທດດ້ອຍພັດທະນາ.

7. ຄວາມຕ້ອງການ ຄວາມຫຼາກຫຼາຍທາງດ້ານເສດຖະກິດ ທີ່ນອກເໜືອຈາກ ຂະແໜງການແບບດັ້ງເດີມ ເຫັນໄດ້ຊັດເຈນຫຼາຍຂຶ້ນ ໂດຍສະເພາະໃນດ້ານການແຂ່ງຂັນຂອງພາກພື້ນ ແລະ ການປ່ຽນແປງຂອງຕະຫຼາດໂລກ. ການພັດທະນາພື້ນຖານໂຄງລ່າງຍັງຄົງເປັນບູລິມະສິດ ໂດຍສະເພາະໃນເຂດຊົນນະບົດທີ່ການເຂົ້າເຖິງຍັງເປັນສິ່ງທີ່ທ້າທາຍ. ຂໍ້ຈຳກັດດ້ານຄວາມສາມາດດ້ານຊັບພະຍາກອນມະນຸດຍັງຄົງມີຢູ່ ໂດຍສະເພາະໃນຂົງເຂດວິຊາການສະເພາະ ແລະ ການບໍລິຫານລັດ. ສະນັ້ນ, ຕ້ອງເອົາໃຈໃສ່ເພີ່ມທະວີຄວາມພະຍາຍາມ ແລະ ການລົງທຶນຫຼາຍຂຶ້ນໃນການພັດທະນາຊັບພະຍາກອນມະນຸດ. ພ້ອມກັນນັ້ນ, ເພື່ອດຶງດູດການລົງທຶນແບບຍືນຍົງຢ່າງມີປະສິດທິຜົນ ໃນຂະນະທີ່ຮັບປະກັນລະບຽບການທີ່ເປັນທຳ, ບັນດາມາດຕະການສຳຄັນທີ່ຈະໄດ້ຮັບການປະຕິບັດໃນໄລຍະປະກາດໃຊ້ຖະແຫຼງການວຽງຈັນສະບັບນີ້ລວມມີ:

- ສ້າງສະພາບແວດລ້ອມທາງທຸລະກິດທີ່ເອື້ອອຳນວຍໂດຍຜ່ານລະບຽບການຄຸ້ມຄອງທີ່ໂປ່ງໃສ ແລະສາມາດຄາດເດົາໄດ້, ເຊິ່ງລວມມີການເຮັດໃຫ້ການລົງທະບຽນທຸລະກິດງ່າຍດາຍຂຶ້ນ ແລະ ສະເໜີໃຫ້ມີການຊຸກຍູ້ນະໂຍບາຍດ້ານສ່ວຍສາອາກອນເພື່ອການປະຕິບັດແບບຍືນຍົງ;
- ການສ້າງຄວາມເຂັ້ມແຂງການຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນ (PPPs) ສາມາດ ຍູ້ແຮງໃຫ້ແກ່ການພັດທະນາໂຄງການພື້ນຖານໂຄງລ່າງທີ່ຕອບສະໜອງໄດ້ທັງຄວາມຕ້ອງການດ້ານເສດຖະກິດ ແລະ ສັງຄົມໂດຍສະເພາະໃນເຂດຊົນນະບົດທີ່ຍັງດ້ອຍໂອກາດ, ໂດຍການກະຈາຍຄວາມສ່ຽງດ້ານການລົງທຶນລະຫວ່າງໜ່ວຍງານພາກລັດ ແລະ ເອກະຊົນ;
- ສົ່ງເສີມຍຸດທະສາດການລົງທຶນຜ່ານການໂຄສະນາໃສ່ຕະຫຼາດຕາມທີ່ເປັນເປົ້າໝາຍ ແລະ ບັນດາອົງການທີ່ໄດ້ມອບໝາຍສະເພາະ ຈະສະໜັບສະໜູນການລົງທຶນໂດຍກົງຈາກຕ່າງປະເທດ (FDI) ໃນຂະແໜງການທີ່ມີການຂະຫຍາຍຕົວສູງເຊັ່ນ: ເຕັກໂນໂລຊີ ແລະ ພະລັງງານທົດແທນ;
- ຮັບປະກັນລະບຽບການທີ່ເປັນທຳ ທີ່ສົ່ງເສີມການມີສ່ວນຮ່ວມຂອງຊຸມຊົນຢູ່ທ້ອງຖິ່ນໃນການຕັດສິນໃຈ ແລະການສ້າງຄວາມເຂັ້ມແຂງໃຫ້ອົງການ ຄຸ້ມຄອງ ລະບຽບການ ລົງຕິດຕາມການຈັດຕັ້ງປະຕິບັດຕາມມາດຕະຖານທີ່ຕິດພັນກັບສິ່ງແວດລ້ອມ ແລະ ສັງຄົມ;
- ການພັດທະນາມະນຸດໂດຍຜ່ານໂຄງການຝຶກອົບຮົມທີ່ມີເປົ້າໝາຍ ແລະ ການຮ່ວມມືກັບສະຖາບັນການສຶກສາຈະເຮັດໃຫ້ກຳລັງແຮງງານມີທັກສະທີ່ຈຳເປັນໃຫ້ແກ່ຂະແໜງການທີ່ກຳລັງພົ້ນເດັ່ນ ແລະ ທ້າຍທີ່ສຸດແລ້ວແມ່ນນຳໄປສູ່ການຍົກລະດັບການຈ້າງງານ ແລະ ການດຶງດູດການລົງທຶນ.

## ບູລິມະສິດ ທີ່ກຳລັງພົ້ນເດັ່ນ

8. ການປ່ຽນແປງດິນຟ້າອາກາດ ແລະ ຄວາມຍືນຍົງດ້ານສິ່ງແວດລ້ອມໄດ້ກາຍເປັນຈຸດໃຈກາງຂອງວາລະການພັດທະນາຂອງ ສປປ ລາວ. ໃນຖານະເປັນປະເທດທີ່ອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ ແລະມີຄວາມສ່ຽງຕໍ່ຜົນກະທົບການປ່ຽນແປງຂອງດິນຟ້າອາກາດ, ພວກເຮົາຕ້ອງສົ່ງເສີມການປັບໂຕເຂົ້າໃສ່ການປ່ຽນແປງ, ສ້າງຄວາມທົນທານ ສົ່ງເສີມຂໍ້ລິເລີ່ມ ການເຕີບໂຕສີຂຽວ. ການຄຸ້ມຄອງຊັບພະຍາກອນທຳມະຊາດຂອງພວກເຮົາໃຫມີຄວາມຍືນຍົງ, ໂດຍສະເພາະແມ່ນປ່າໄມ້ ແລະ ແຫຼ່ງນໍ້າ, ແມ່ນສຳຄັນຕໍ່ການປົກປັກຮັກສາສິ່ງແວດລ້ອມ ແລະ ການພັດທະນາເສດຖະກິດ.

9. ການຫັນປ່ຽນ ເສດຖະກິດໃນ ສປປ ລາວ ຮຽກຮ້ອງໃຫ້ມີຫຼາຍວິທີການ. ການສຶກສາ ແລະ ທັກສະແມ່ນເປັນພື້ນຖານໃຫ້ແກ່ການຫັນປ່ຽນເສດຖະກິດ-ສັງຄົມໃນໄລຍະຍາວ ແລະ ມີຄວາມສຳຄັນຕໍ່ການພັດທະນາຊັບພະຍາກອນມະນຸດ. ເພື່ອໝູນໃຊ້ທ່າແຮງດັ່ງກ່າວຢ່າງມີປະສິດທິຜົນ, ມັນເປັນສິ່ງຈຳເປັນທີ່ຈະຕ້ອງສ້າງຄວາມເຂັ້ມແຂງໃຫ້ແກ່ການຝຶກອົບຮົມວິຊາຊີບ, ການສຶກສາຊັ້ນສູງ, ແລະ ຄວາມຮູ້ທາງດ້ານດິຈິຕອລ. ຂົງເຂດຈຸດສຸມເຫຼົ່ານີ້ ແມ່ນມີຄວາມສຳຄັນເປັນພິເສດ ໃນທ່າມກາງມີການເຄື່ອນຍ້າຍແຮງງານຊາວໜຸ່ມທີ່ຊອກຫາໂອກາດອອກແຮງງານຢູ່ຕ່າງປະເທດ. ການພັດທະນາເສດຖະກິດດິຈິຕອນລ ສ້າງກາລະໂອກາດໃຫ້ແກ່ການປະດິດສ້າງ ແລະ ມີປະສິດທິພາບໃນທົ່ວຂະແໜງການ. ການສ້າງຄວາມເຂັ້ມແຂງໃຫ້ແກ່ພາກເອກະຊົນ, ໂດຍສະເພາະ ວິສາຫະກິດ ຂະໜາດນ້ອຍ-ກາງ (SMEs) ແມ່ນມີຄວາມຈຳເປັນໃນການສ້າງໂອກາດການຈ້າງງານ ແລະ ຊຸກຍູ້ການເຕີບໂຕຂອງເສດຖະກິດ. ການເຊື່ອມໂຍງພາກພື້ນຢ່າງເລິກເຊິ່ງ ພິເສດແມ່ນຜ່ານຂອບແຜນງານອາຊຽນ ທີ່ສາມາດເສີມຂະຫຍາຍກາລະໂອກາດການຄ້າ ແລະ ການແລກປ່ຽນຄວາມຮູ້.

10. ການພັດທະນາສັງຄົມ ຍັງຄົງເປັນຈຸດໃຈກາງຂອງວາລະການພັດທະນາຂອງພວກເຮົາ. ການລົງທຶນໃນການພັດທະນາຊັບພະຍາກອນມະນຸດ ໂດຍສະເພາະແມ່ນດ້ານການສຶກສາ ແລະ ສາທາລະນະສຸກ ແມ່ນສຳຄັນທີ່ສຸດໃນການສ້າງກຳລັງແຮງງານທີ່ມີຄວາມສາມາດທີ່ຊ່ວຍຊຸກຍູ້ການເຕີບໂຕຂອງເສດຖະກິດ. ສິ່ງເສີມສິດໃນການເຂົ້າເຖິງການເບິ່ງແຍງສຸຂະພາບ, ການສຶກສາ, ແລະ ການປົກປ້ອງສັງຄົມແມ່ນມີຄວາມຈຳເປັນສຳລັບການຮັບປະກັນການພັດທະນາທີ່ມີສ່ວນຮ່ວມ ແລະ ການປົກປ້ອງປະຊາກອນດ້ອຍໂອກາດ. ຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ການຈ້າງງານຂອງໄວໜຸ່ມ ແມ່ນມີສຳຄັນ ໃນການສ້າງສັງຄົມທີ່ມີຄວາມທ່ຽງທຳ ແລະ ຈະເລີນຮຸ່ງເຮືອງ. ໂດຍສະເພາະການຫຼຸດຜ່ອນຄວາມທຸກຍາກຢ່າງມີປະສິດທິຜົນ ຈະຕ້ອງ ເອົາໃຈໃສ່ຄວາມບໍ່ສະເຫມີພາບໃນສະຖານະພາບທີ່ກຽມຫຼຸດພົ້ນອອກຈາກປະເທດທີ່ດ້ອຍພັດທະນາ (LDC) ໃນຂະນະທີ່ຮັບປະກັນວ່າຈະບໍ່ປ່ອຍປະໃຜໄວ້ຢູ່ຂ້າງຫຼັງ.

### ຄຳໝັ້ນສັນຍາ ໃນຂັ້ນຕໍ່ໜ້າ

11. ໃນເມື່ອເບິ່ງໄປຂ້າງໜ້າ, ພວກເຮົາ ຮັບຮູ້ວ່າການພັດທະນາແບບຍືນຍົງໃນ ສປປ ລາວ ຕ້ອງການທັງການສືບຕໍ່ ແລະ ນະວັດຕະກຳ. ມັນເປັນສິ່ງຈຳເປັນທີ່ຈະເພີ່ມທະວີການພົວພັນຄູ່ຮ່ວມມືທີ່ມີຢູ່ແລ້ວ ໃນຂະນະທີ່ຍັງໄດ້ຮັບເອົາຮູບແບບການຮ່ວມມືໃໝ່ທີ່ຫັນປ່ຽນຈາກວິທີການຊ່ວຍເຫຼືອໄປເປັນຮູບແບບການເງິນທີ່ມີການເຊື່ອມໂຍງເຂົ້າຫາກັນ. ຮູບແບບນີ້ຄວນຜັນຂະຫຍາຍການສະໜອງການເງິນທີ່ຫຼາກຫຼາຍ, ລວມທັງການເງິນພາຍໃນປະເທດ, ການເງິນສາທາລະນະສາກົນ (ການຊ່ວຍເຫຼືອທາງການເພື່ອການ ການພັດທະນາ ຫຼື ODA), ການເງິນພາກເອກະຊົນພາຍໃນປະເທດ, ແລະ ການເງິນເອກະຊົນສາກົນ (ການລົງທຶນໂດຍກົງຈາກຕ່າງປະເທດ ຫຼື FDI). ໃນການສ້າງຄວາມຫຼາກຫຼາຍຂອງແຫຼ່ງທຶນຂອງພວກເຮົາ, ພວກເຮົາສາມາດສ້າງໂຄງຮ່າງເສດຖະກິດທີ່ມີຄວາມມີການປັບຕົວ ແລະ ຍືນຍົງກວ່າເກົ່າ ເພື່ອສະໜັບສະໜູນເປົ້າໝາຍການພັດທະນາໃນໄລຍະຍາວ ເພື່ອເຮັດໃຫ້ສິ່ງດັ່ງກ່າວປະກົດຜົນເປັນຈິງ, ພວກເຮົາຕ້ອງໃຊ້ຄວາມພະຍາຍາມ ແລະ ຫັນປ່ຽນຍຸດທະສາດການເງິນໃນວຽກງານຍຸດທະສາດດ້ານການເງິນຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 9 ແລະ 10 (NSEDP 2021–2025 ແລະ 2026–2030) ແມ່ນແນວທາງລວມ ໂດຍເນັ້ນໜັກເຖິງຄວາມຈຳເປັນໃນການເຊື່ອມໂຍງຍຸດທະສາດດ້ານການເງິນໂດຍກົງກັບເປົ້າໝາຍການພັດທະນາ.

12. ເມື່ອ ສະພາບຂອງການຊ່ວຍເຫຼືອທາງການເພື່ອການພັດທະນາ (ODA) ມີການປ່ຽນແປງ, ຈຶ່ງມີຄວາມຈຳເປັນອັນຮີບດ່ວນທີ່ຈະຕ້ອງ ປັບປຸງລະບຽບການບໍລິຫານເພື່ອການຄຸ້ມຄອງທຶນ ODA ໃຫ້ມີປະສິດທິຜົນ. ຍ້ອນວ່າການຊ່ວຍເຫຼືອທາງການເພື່ອການພັດທະນາ ODA ຫຼຸດລົງ, ເຊິ່ງຈຳເປັນຕ້ອງຊອກລະດົມການລົງທຶນໃຫ້ຫຼາຍຂຶ້ນກວ່າເກົ່າ ໂດຍຜ່ານຮູບແບບການສະຫນອງທຶນປະສົມປະສານທີ່ມີການມີສ່ວນຮ່ວມຈາກພາກເອກະຊົນ. ໂດຍການເພີ່ມປະສິດທິຜົນຂອງການນຳໃຊ້ ທຶນODA, ພວກເຮົາສາມາດໝູນໃຊ້ແຫຼ່ງທຶນທີ່ມີຄວາມສຳຄັນເພື່ອໃຫ້ສາມາດ ການບັນລຸເປົ້າໝາຍການພັດທະນາແບບຍືນຍົງ.

13. ເພື່ອອຳນວຍຄວາມສະດວກໃຫ້ແກ່ຂະບວນການດັ່ງກ່າວ, ຂະບວນການບໍລິຫານທີ່ວ່ອງໄວ ແລະ ມີປະສິດທິຜົນແມ່ນສຳຄັນທີ່ສຸດ. ການປັບປຸງຂະບວນການເຫຼົ່ານີ້ບໍ່ພຽງແຕ່ຈະເພີ່ມທະວີການຄຸ້ມຄອງແຫຼ່ງທຶນ ODA ໃຫ້ດີຂຶ້ນເທົ່ານັ້ນ ແຕ່ຍັງຍົກສູງປະສິດທິຜົນລວມຂອງຂໍ້ລິເລີ່ມພັດທະນາ. ການຫຼຸດຜ່ອນຂັ້ນຕອນບໍລິຫານ ແລະ ການຮັບປະກັນວ່າກອງທຶນໄດ້ຖືກຈັດສັນ ແລະ ນຳໃຊ້ຢ່າງທັນກັບສະພາບການ, ພວກເຮົາສ້າງກົນໄກມີຄວາມຮັບຜິດຊອບຮ່ວມກັນ ແລະ ກວດສອບໄດ້ ເພື່ອດຶງດູດການລົງທຶນຂອງພາກເອກະຊົນ. ວິທີການນີ້ຈະຊ່ວຍໃຫ້ ສປປ ລາວ ຫຼຸດຜ່ອນຜົນກະທົບຈາກການຫຼຸດລົງ ODA ໄດ້ໄວທີ່ສຸດ, ຊຸກຍູ້ສະພາບແວດລ້ອມການນຳໃຊ້ແຫຼ່ງທຶນຈາກພາກລັດ ແລະ ເອກະຊົນ ຮ່ວມກັນ ເພື່ອແກ້ໄຂສິ່ງທ້າທາຍອັນຮີບດ່ວນຂອງການພັດທະນາ. ສຸດທ້າຍແລ້ວ ໂດຍການປະສານລະຫວ່າງລະບຽບບໍລິຫານ ແລະ ນຳໃຊ້ແຫຼ່ງທຶນ ODA ເປັນເຄື່ອງມືເພື່ອຜັນຂະຫຍາຍຍຸດທະສາດ, ພວກເຮົາສາມາດສ້າງອະນາຄົດດ້ານເສດຖະກິດແບບຍືນຍົງ ແລະ ມີສ່ວນຮ່ວມ ໃຫ້ແກ່ປະເທດໄດ້.

14. ພວກເຮົາ ຕ້ອງດຸ່ນດ່ຽງການກະກຽມຫຼຸດພົ້ນຈາກປະເທດດ້ອຍພັດທະນາ ກັບຄວາມຕ້ອງການທີ່ຈະໃຫ້ການຊ່ວຍເຫຼືອພົນລະເມືອງທີ່ດ້ອຍໂອກາດ. ພວກເຮົາຕ້ອງເພີ່ມທະວີການລະດົມລາຍຮັບໃນປະເທດ ພ້ອມທັງຮັບປະກັນການຮ່ວມມືພັດທະນາມີປະສິດທິຜົນ ແລະ ສອດຄ່ອງກັບບັນດາບຸລິມະສິດຂອງຊາດ. ຖະແຫຼງການວຽງຈັນ ສະບັບທີ III ນີ້, ພວກເຮົາໃຫ້ຄຳໝັ້ນສັນຍາວ່າ:

- ເສີມສ້າງຄວາມເຂັ້ມໃຫ້ແກ່ລະບົບຕ່າງໆຂອງປະເທດ ແລະ ສ້າງຂີດຄວາມສາມາດຂອງສະຖາບັນ ໂດຍເນັ້ນໃສ່ການປັບປຸງຂັ້ນຕອນເພື່ອຫຼີກລ່ຽງຂັ້ນຕອນທີ່ສັບສົນ ແລະ ຫຼາຍເກີນໄປ;
- ເພີ່ມທະວີການຄາດຄະເນ, ຄວາມໂປ່ງໃສ ແລະ ຄວາມຮັບຜິດຊອບຂອງການຮ່ວມມືເພື່ອການພັດທະນາ;
- ສົ່ງເສີມການເປັນຄູ່ຮ່ວມມື ທີ່ມີສ່ວນຮ່ວມ ແລະ ຄວາມຮັບຜິດຊອບຮ່ວມກັນ ຂອງພາກສ່ວນທີ່ກ່ຽວຂ້ອງ;
- ສົ່ງເສີມການວາງແຜນໂດຍອີງໃສ່ຂໍ້ມູນທີ່ແທ້ຈິງ;
- ຊຸກຍູ້ການລະດົມລາຍຮັບພາຍໃນເພື່ອການພັດທະນາແບບຍືນຍົງ.

15. ຖະແຫຼງການສະບັບນີ້ສ້າງຂຶ້ນ ຈາກການແລກປ່ຽນປະສົບການຮ່ວມກັນຂອງພວກເຮົາ ໃນຂະນະທີ່ປັບຕົວເຂົ້າກັບສິ່ງທ້າທາຍໃໝ່ໆ. ມັນສະແດງເຖິງຄວາມຕັ້ງໃຈຮ່ວມກັນຂອງພວກເຮົາເພື່ອເສີມຂະຫຍາຍປະສິດທິຜົນການພັດທະນາ ໂດຍຜ່ານການຮ່ວມມືທີ່ແທ້ຈິງ, ຄວາມຮັບຜິດຊອບຮ່ວມກັນ ແລະສຸມໃສ່ການປະຕິບັດຕົວຈິງ. ຮ່ວມກັນກ້າວໄປໜ້າດ້ວຍຄຳໝັ້ນສັນຍາໃໝ່ ເພື່ອບັນລຸຜົນການພັດທະນາແບບຍືນຍົງ ທີ່ມີຜົນປະໂຫຍດໃຫ້ແກ່ປະຊາຊົນລາວ.

DRAFT

16. ຄຳໝັ້ນສັນຍາຂອງພວກເຮົາຈະເສີມສ້າງຄວາມເຂັ້ມແຂງໃຫ້ບັນດາລະບົບ ຂອງປະເທດສະແດງໃຫ້ເຫັນເຖິງຄວາມມຸ່ງໝັ້ນຂອງພວກເຮົາທີ່ຈະເພີ່ມປະສິດທິພາບການພັດທະນາໂດຍຜ່ານການປັບປຸງການຄຸ້ມຄອງການເງິນພາກລັດ ແລະ ສົ່ງເສີມຄວາມສາມາດຂອງສະຖາບັນ. ການຊຸກຍູ້ການພົວພັນຄູ່ຮ່ວມມືຮອບດ້ານໄດ້ຮັບຮູ້ຄວາມຫຼາກຫຼາຍຂອງບັນດາພາກສ່ວນທີ່ກ່ຽວຂ້ອງທີ່ຈຳເປັນເພື່ອການພັດທະນາແບບຍືນຍົງ, ໃນນັ້ນມີອົງການຈັດຕັ້ງທາງສັງຄົມ, ພາກເອກະຊົນ, ແລະ ຄູ່ຮ່ວມມືສາກົນ.

17. ການວາງແຜນ ແລະ ການຈັດຕັ້ງປະຕິບັດທີ່ອີງໃສ່ຜົນສຳເລັດຕົວຈິງ ຈະນຳພາຂໍ້ລິເລີ່ມການພັດທະນາຂອງພວກເຮົາເພື່ອຮັບປະກັນການຈັດສັນທຶນທີ່ມີປະສິດທິພາບ ແລະ ຜົນໄດ້ຮັບທີ່ສາມາດວັດແທກໄດ້. ເພີ່ມທະວີຄວາມໂປ່ງໃສ ແລະ ກົນໄກຄວາມຮັບຜິດຊອບຮ່ວມກັນຈະເພີ່ມທະວີຄວາມໄວ້ເນື້ອເຊື່ອໃຈ ແລະ ການຮ່ວມມື ລະຫວ່າງ ບັນດາຄູ່ຮ່ວມພັດທະນາ. ການຄາດຄະເນ ແລະ ຄວາມກົມກຽວຂອງການຮ່ວມມືໃນການພັດທະນາຈະປັບປຸງການວາງແຜນ ແລະ ການບໍລິຫານຈັດການຊັບພະຍາກອນໃຫ້ມີປະສິດທິຜົນ

18. ຖະແຫຼງການສະບັບນີ້ສອດຄ່ອງກັບບັນດາວຽກບຸລິມະສິດລະດັບຊາດ ແລະ ຄຳໝັ້ນສັນຍາຕໍ່ສາກົນ, ລວມທັງວາລະການພັດທະນາແບບຍືນຍົງປີ 2030 ແລະ ຂອບການຮ່ວມມືໃນພາກພື້ນຕ່າງໆ. ມັນສະແດງອອກເຖິງວິໄສທັດລວມຂອງພວກເຮົາສຳລັບການເລັ່ງລັດໃສ່ການພັດທະນາຂອງ ສປປ ລາວ ໂດຍຜ່ານຄູ່ຮ່ວມມືໃນຂະນະທີ່ຮັບຮູ້ເຖິງສະພາບການທີ່ສັບສົນ ແລະ ສິ່ງທ້າທາຍຕ່າງໆໃນຕໍ່ໜ້າ.

19. ການຈັດຕັ້ງປະຕິບັດຖະແຫຼງການສະບັບນີ້ໃຫ້ປະສົບຜົນສຳເລັດ ຮຽກຮ້ອງໃຫ້ມີຄວາມມຸ່ງໝັ້ນ ຢ່າງບໍ່ຢຸດຢັ້ງຈາກບັນດາຄູ່ຮ່ວມມື, ການລະດົມແຫຼ່ງທຶນຢ່າງພຽງພໍ ແລະ ປັບປຸງກົນໄກການປະສານງານ. ໂດຍຜ່ານຄວາມພະຍາຍາມລວມເຫຼົ່ານີ້, ພວກເຮົາພະຍາຍາມເພື່ອບັນລຸຄວາມມຸ່ງມາດປາດຖະໜາໃນການພັດທະນາຂອງ ສປປ ລາວ ໃນຂະນະທີ່ຮັບປະກັນການຂະຫຍາຍຕົວແບບຍືນຍົງ ແລະ ສ້າງຜົນປະໂຫຍດລວມຕໍ່ສັງຄົມ. ສະນັ້ນ, ພວກຂ້າພະເຈົ້າໃຫ້ສັນຍາວ່າຈະສືມທົບກັນທົບທວນຄືນວຽກຂະບວນການໂຕະມົນ ເພື່ອສາມາດປັບຕົວເຂົ້າກັບສະພາບການພັດທະນາ ພວກເຮົາຈະເລີ່ມຕົ້ນການທົບທວນ ເພື່ອອອກແບບບັນດາທາງເລືອກ ຂອງຂະບວນການ ໂຕະມົນ ດ້ວຍຄຳແນະນຳເພື່ອສ້າງຄວາມເຂັ້ມແຂງແກ່ ສະຖາບັນ, ວຽກງານການເງິນ, ດ້ານວິຊາການ ແລະຄວາມຍືນຍົງຂອງຂະບວນການດັ່ງກ່າວ.

DRAFT

## II. ຫຼັກການສຳຄັນທີ່ເປັນແນວທາງການຮ່ວມມືເພື່ອການພັດທະນາ ແຕ່ປີ 2026 - 2035.

20. ການສ້າງການວິເຄາະຂໍ້ມູນ 6 ຫຼັກການ ໃຫ້ແກ່ຖະແຫຼງການວຽງຈັນ ສະບັບທີ່ III (VD III), ເປົ້າໝາຍ ປີ 2026 ຫາ 2035 ແມ່ນອີງໃສ່ການວິເຄາະຢ່າງລະອຽດກ່ຽວກັບປະສົບການທີ່ຜ່ານມາ, ສິ່ງທ້າທາຍໃນປະຈຸບັນ ແລະ ອະນາຄົດ ຂອງ ສປປ ລາວ. ການສ້າງບັນດາຫຼັກການນີ້ປະສົມປະສານການປະກອບຄຳຄິດເຫັນຈາກທຸກພາກສ່ວນກ່ຽວຂ້ອງ, ບົດຮຽນທີ່ຖອດຖອນຈາກການຈັດຕັ້ງປະຕິບັດຖະແຫຼງການໃນໄລຍະຜ່ານມາ, ກຳນົດຫຼັກການໃຫ້ສອດຄ່ອງກັບບັນດາ ຂອບແຜນງານຮ່ວມມືຂອງສາກົນ, ແລະການຕອບໂຕ້ຢ່າງຈິງຈັງຕໍ່ສິ່ງທ້າທາຍທີ່ກຳລັງເກີດຂຶ້ນ, ລວມທັງກົນໄກການ ພັດທະນາໃນຂະແໜງການເງິນໄດ້ ຊີ້ໃຫ້ເຫັນເຫດຜົນ ສຳລັບບັນດາຫຼັກການດັ່ງລາຍລະອຽດລຸ່ມນີ້:

21. ການກຳນົດ 6 ຫຼັກການ ແມ່ນ ມາຈາກ ການປຶກສາຫາລືຢ່າງກວ້າງຂວາງກັບພາກສ່ວນທີ່ກ່ຽວຂ້ອງທີ່, ລວມທັງ ຂະແໜງການຂອງພາກລັດ, ອົງການຈັດຕັ້ງສັງຄົມ, ພາກເອກະຊົນ, ແລະຄູ່ຮ່ວມພັດທະນາ. ວິທີການ ທີ່ມີສ່ວນຮ່ວມນີ້ ຮັບປະກັນວ່າ ບັນດາທັດສະນະຂອງທຸກພາກສ່ວນທີ່ກ່ຽວຂ້ອງໄດ້ຮັບການພິຈາລະນາ, ເຮັດໃຫ້ມີຄວາມເຂົ້າໃຈຢ່າງເລິກ ເຊິ່ງກ່ຽວກັບສິ່ງທ້າທາຍ ແລະ ກາລະໂອກາດໃນການພັດທະນາ. ບັນດາຄຳຄິດເຫັນຂອງພາກສ່ວນທີ່ກ່ຽວຂ້ອງໄດ້ເນັ້ນ ໜັກເຖິງຄວາມຈຳເປັນສຳລັບຫຼັກການ ທີ່ບໍ່ພຽງແຕ່ແກ້ໄຂປະສິດທິຜົນຂອງການຊ່ວຍເຫຼືອແບບດັ້ງເດີມເທົ່ານັ້ນ, ແຕ່ ຍັງເປັນຄວາມມຸ່ງຫວັງຂອງປະຊາຊົນລາວໃນການພັດທະນາແບບຍືນຍົງ ແລະ ທ່ຽງທາຕື່ມອີກ.

22. ການຖອດຖອນບົດຮຽນໃນການຈັດຕັ້ງປະຕິບັດຈາກຖະແຫຼງການວຽງຈັນ ສະບັບທີ່ I (VD I) ແລະ ຖະແຫຼງການ ວຽງຈັນ ສະບັບທີ່ II (VD II) ມາເປັນ VD III ບົດຮຽນສຳຄັນ ຈາກການທົບທວນການຮ່ວມມືດ້ານການພັດທະນາແບບ ມີປະສິດທິຜົນທົ່ວໂລກ (GPEDC) ແລະ ການທົບທວນຄັ້ງສຸດທ້າຍຂອງ VD II ໄດ້ຊີ້ໃຫ້ເຫັນເຖິງຄວາມສຳຄັນຂອງ ການເພີ່ມຄວາມຮັບຜິດຊອບ ແລະການຄຸ້ມຄອງຜົນໄດ້ຮັບຮ່ວມກັນ. ຄຳແນະນຳຈາກການປະເມີນຜົນເຫຼົ່ານີ້ເຫັນວ່າມີ ຄວາມຕ້ອງການກົນໄກທີ່ເຂັ້ມແຂງກວ່າເກົ່າເພື່ອຕິດຕາມຄວາມຄືບໜ້າ ແລະຮັບປະກັນວ່າຄວາມພະຍາຍາມໃນການ ພັດທະນາສອດຄ່ອງກັບຄວາມຕ້ອງການຂອງທ້ອງຖິ່ນ. ນອກຈາກນັ້ນ, ການທົບທວນຄືນໄດ້ຊີ້ໃຫ້ເຫັນເຖິງຄວາມຈຳ ເປັນຂອງການສົ່ງເສີມການ ມີສ່ວນຮ່ວມຫຼາຍກວ່າເກົ່າໃນຂະບວນການຕັດສິນໃຈ, ໂດຍສະເພາະແມ່ນການພົວພັນກັບ ກຸ່ມທີ່ດຳລົງຊີວິດຢູ່ໃນສະພາບທີ່ດ້ອຍໂອກາດ, ເພື່ອຮັບປະກັນວ່າຜົນປະໂຫຍດດ້ານການພັດທະນາໄດ້ຖືກແຈກຢາຍ ຢ່າງເທົ່າທຽມກັນ.

23. ຫຼັກການຂອງຖະແຫຼງການວຽງຈັນ ສະບັບທີ່ III (VDIII) ໄດ້ຖືກສ້າງຂຶ້ນຢ່າງລະອຽດຮອບຄອບເພື່ອສອດຄ່ອງກັບ ການເປັນຄູ່ຮ່ວມມືສາກົນ ເພື່ອການພັດທະນາຢ່າງມີປະສິດທິຜົນ, ຮັບປະກັນວ່າຍຸດທະສາດການພັດທະນາຂອງ ສປປ ລາວ ແມ່ນມີຄວາມສອດຄ່ອງທັງພາຍໃນ ແລະ ສາກົນ. ຄວາມສອດຄ່ອງ ດັ່ງກ່າວ ແມ່ນມີຄວາມຈຳເປັນເພື່ອຊຸກຍູ້ ທິດ ທາງໄປໃນລວງດຽວກັນ ຂອງຄວາມພະຍາຍາມໃນການພັດທະນາ ແລະ ເພີ່ມທະວີຄວາມໜ້າເຊື່ອຖື ແລະ ການດຶງດູດ ການລົງທຶນຂອງຕ່າງປະເທດ ແລະ ການຮ່ວມມືຂອງປະເທດ. ການພົວພັນກັບຄູ່ຮ່ວມມືທົ່ວໂລກເນັ້ນໜັກເຖິງບັນດາ ຫຼັກການປະສິດທິຜົນທີ່ສຳຄັນເຊັ່ນ: ຄວາມເປັນເຈົ້າການຂອງປະເທດ, ສຸມໃສ່ບັນດາຜົນສຳເລັດ, ການພົວພັນຄູ່ຮ່ວມມື ທີ່ມີສ່ວນຮ່ວມ, ຄວາມຮັບຜິດຊອບຮ່ວມກັນ, ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດວາລະ 2030. ໂດຍການນຳ ເອົາຫຼັກການດັ່ງກ່າວ, ສປປ ລາວ ສາມາດຍູ້ແຮງວິວັດການພັດທະນາຮອບດ້ານຂອງສັງຄົມ, ຊຸກຍູ້ໃຫ້ມີການເຂົ້າຮ່ວມ

DRAFT

ຂອງບັນດາພາກສ່ວນທີ່ກ່ຽວຂ້ອງທີ່ຫຼາກຫຼາຍ, ລວມທັງອົງການຈັດຕັ້ງສັງຄົມ, ພາກເອກະຊົນ ແລະ ສະພາແຫ່ງຊາດ. ການມີສ່ວນຮ່ວມນີ້ມີຄວາມສໍາຄັນຕໍ່ການສ້າງສະພາບແວດລ້ອມທີ່ສະໜັບສະໜູນທີ່ເພີ່ມຄວາມຮັບຜິດຊອບ ແລະ ຄວາມໂປ່ງໃສໃນການຮ່ວມມືພັດທະນາ. ສຸດທ້າຍແລ້ວ ຄວາມສອດຄ່ອງ ຂອງ VDIII ກັບຄູ່ຮ່ວມມືສາກົນນັ້ນ ບໍ່ພຽງແຕ່ເສີມສ້າງຄວາມສາມາດຂອງ ສປປ ລາວ ໃນການລະດົມແຫຼ່ງທຶນຢ່າງມີປະສິດທິຜົນເທົ່ານັ້ນ, ແຕ່ຍັງເຮັດໃຫ້ປະເທດສາມາດໝູນໃຊ້ການສະໜັບສະໜູນຈາກສາກົນເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງ.

24. ການກໍານົດ 6 ຫຼັກການ ສະແດງໃຫ້ເຫັນເຖິງການເຕົ້າໂຮມວິທີການທີ່ຕັ້ງໜ້າຕໍ່ກັບສິ່ງທ້າທາຍ ໃນສະພາບການລາວ. ສິ່ງທ້າທາຍເຫຼົ່ານີ້ປະກອບມີການປ່ຽນແປງຂອງດິນຟ້າອາກາດ, ການຫັນເປັນຕົວເມືອງ, ຄວາມຫຼາກຫຼາຍທາງດ້ານເສດຖະກິດ, ແລະການປ່ຽນແປງທາງດ້ານ ການສະໜອງການທຶນ ເພື່ອການພັດທະນາ. ຄວາມສັບສົນທີ່ເພີ່ມຂຶ້ນຂອງການເງິນເພື່ອການພັດທະນາ - ມີ ການປ່ຽນແປງໄປສູ່ຮູບແບບການເງິນທີ່ປະສົມປະສານ, ກົນໄກການເງິນທີ່ມີນະວັດກໍາໃໝ່, ແລະຄວາມຕ້ອງການສໍາລັບການລົງທຶນແບບຍືນຍົງ - ຮຽກຮ້ອງໃຫ້ມີຂອບແຜນງານທີ່ມີຄວາມຮັບຜິດຊອບທີ່ເນັ້ນຫນັກໃສ່ຄວາມຍືນຍົງ, ຄວາມທົນທານ, ແລະ ການລວມກັນເປັນໜຶ່ງດຽວ. ຫຼັກການເຫຼົ່ານີ້ຖືກອອກແບບເພື່ອແກ້ໄຂສິ່ງທ້າທາຍເຫຼົ່ານີ້ໂດຍກົງ ໂດຍເນັ້ນໃສ່ຄວາມຍືນຍົງດ້ານສິ່ງແວດລ້ອມ ແລະ ຄວາມທ່ຽງທໍາທາງສັງຄົມ ໂດຍສະເພາະໃນປະເທດທີ່ຮັ່ງມີໄປດ້ວຍຊັບພະຍາກອນທໍາມະຊາດມີບົດບາດສໍາຄັນໃນການພັດທະນາເສດຖະກິດ.

25. ຮັບຮູ້ບົດບາດອັນສໍາຄັນຂອງຊັບພະກອນມະນຸດໃນການບັນລຸການພັດທະນາແບບຍືນຍົງ, ຫຼັກການໃໝ່ໃຫ້ບຸລິມະສິດການລົງທຶນໃນການສຶກສາ, ພັດທະນາສີມືແຮງງານ, ການສ້າງຂີດຄວາມສາມາດ. ຈຸດສຸມນີ້ແມ່ນມີຄວາມກ່ຽວຂ້ອງ ໂດຍສະເພາະໃນສະພາບການຂອງ ສປປ ລາວ ເຊິ່ງມີຄວາມຈໍາເປັນຢ່າງຮີບດ່ວນ ເພື່ອຍົກສູງຄວາມສາມາດຂອງກໍາລັງແຮງງານ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງເສດຖະກິດທີ່ມີການປ່ຽນແປງຢ່າງວ່ອງໄວ. ໂດຍເນັ້ນໜັກເຖິງຊັບພະຍາກອນມະນຸດ, ບັນດາຫຼັກການແນໃສ່ສ້າງຄວາມເຂັ້ມແຂງໃຫ້ແກ່ສ່ວນບຸກຄົນ ແລະ ຊຸມຊົນ, ສົ່ງເສີມໃຫ້ພົນລະເມືອງທີ່ມີຄວາມສາມາດ ແລະ ສາມາດປັບຕົວໄດ້ ເພື່ອຊຸກຍູ້ການພັດທະນາຂອງປະເທດໃຫ້ກ້າວໄປໜ້າຢ່າງບໍ່ຢຸດຢັ້ງ.

26. ສຸດທ້າຍ, ຫຼັກການຖືກອອກແບບໂດຍເນັ້ນໜັກໃສ່ກົນໄກການຈັດຕັ້ງປະຕິບັດ ແລະ ການຕິດຕາມຢ່າງມີປະສິດທິພາບ. ນີ້ປະກອບມີການສ້າງມາດຕະຖານທີ່ຊັດເຈນ ແລະຂອບຄວາມຮັບຜິດຊອບເພື່ອຮັບປະກັນວ່າຄໍາຫມັ້ນສັນຍາແມ່ນບັນລຸໄດ້ ແລະສາມາດຕິດຕາມຄວາມຄືບຫນ້າໃນແຕ່ລະໄລຍະ. ໂດຍການໃຫ້ບຸລິມະສິດຄວາມໂປ່ງໃສ ແລະ ຄວາມຮັບຜິດຊອບ, ຫຼັກການໃໝ່ແນໃສ່ສ້າງຄວາມໄວ້ເນື້ອເຊື່ອໃຈ ລະຫວ່າງ ບັນດາພາກສ່ວນກ່ຽວຂ້ອງ ແລະ ຮັບປະກັນໃຫ້ ພະຍາຍາມຮ່ວມມືພັດທະນາ ມີຜົນສໍາເລັດທີ່ປະຈັກຕໍ່ປະຊາຊົນ ສປປ ລາວ.

| ຫຼັກການທີ 1: ຄວາມເປັນເຈົ້າການ ແລະ ຄວາມເປັນຜູ້ນຳຢູ່ພາຍໃນປະເທດ |
|---|

27. **ການທົບທວນຄວາມຄືບໜ້າ** (2006–2025): ໃນໄລຍະ 2 ທົດສະວັດຜ່ານມາ, ສປປ ລາວ ໄດ້ສະແດງໃຫ້ເຫັນເຖິງການເພີ່ມທະວີຄວາມເປັນເຈົ້າການຂອງຕົນ ໂດຍຜ່ານການປັບປຸງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ທີ່ສະທ້ອນໃຫ້ເຫັນເຖິງບູລິມະສິດແຫ່ງຊາດ ແລະ ຍຸດທະສາດຂອງຂະແໜງການ. ລະບົບການຄຸ້ມຄອງການເງິນພາກລັດແມ່ນໄດ້ຮັບການປັບປຸງທີ່ພົ້ນເດັ່ນຂຶ້ນ ໂດຍສະເພາະໃນການກະກຽມ ແລະ ການປະຕິບັດງົບປະມານ. ການຄຸ້ມຄອງການຮ່ວມມືດ້ານການພັດທະນານັບມື້ນັບເປັນລະບົບ ໂດຍ ສະຖາບັນ ແລະ ບັນດາກົນໄກ ໄດ້ຮັບການປັບປຸງ ເພື່ອການປະສານງານ ກັບພາຍນອກ ໃນການຊ່ວຍເຫຼືອ.

28. ທິດທາງໃນຕໍ່ໜ້າ (2026–2035): ໃນຂະນະທີ່ ສປປ ລາວ ກ້າວໄປສູ່ການຫຼຸດພົ້ນຈາກປະເທດດ້ອຍພັດທະນາ, ຄວາມເປັນເຈົ້າການຂອງປະເທດຈະເນັ້ນໃສ່ການເສີມສ້າງຄວາມສາມາດໃນການລະດົມທຶນພາຍໃນ ໃນຂະນະທີ່ການປັບປຸງ ລະບົບການຄຸ້ມຄອງກະແສເງິນທີ່ຫຼາກຫຼາຍຂຶ້ນ. ໃນນັ້ນລວມທັງການປັບປຸງການຄຸ້ມຄອງສ່ວຍສາອາກອນ, ເພີ່ມທະວີການຄຸ້ມຄອງການລົງທຶນພາກລັດ ແລະ ສ້າງຂອບແຜນງານການຮ່ວມມືພາກລັດ-ເອກະຊົນໃຫ້ເຂັ້ມແຂງ. ລັດຖະບານ ຈະລິງເລີກກົນໄກປະສານງານຂອງຂະແໜງການ ເພື່ອຮັບປະກັນການຈັດສັນທຶນໃຫ້ມີປະສິດທິຜົນກວ່າເກົ່າ ແລະ ເພີ່ມທະວີການຄຸ້ມຄອງທ້ອງຖິ່ນເພື່ອຍົກລະດັບການບໍລິການ. ໂດຍສະເພາະແມ່ນຈະເນັ້ນໃສ່ການສ້າງຄວາມສາມາດຂອງສະຖາບັນໃນການຄຸ້ມຄອງສິ່ງທ້າທາຍ ແລະກາລະໂອກາດຂອງການຫຼຸດພົ້ນຈາກປະເທດດ້ອຍພັດທະນາ, ຮັບປະກັນຄວາມກ້າວຫນ້າຂອງການພັດທະນາແບບຍືນຍົງ ທີ່ຕໍ່ເນື່ອງໃຫ້ກາຍຂອບເວລາທີ່ການົດໄວ້.

| ໄລຍະເວລາ | ຂົງເຂດຈຸດສຸມ | ອົງປະກອບທີ່ສຳຄັນ |
|---|---|---|
| VD ສະບັບທີ I (2006–2015) | • ຄວາມເປັນເຈົ້າການທີ່ເປັນພື້ນຖານຂອງປະເທດ<br>• ແຜນພັດທະນາແຫ່ງຊາດ<br>• ການ ປະຕິຮູບ PFM ໃນເບື້ອງຕົ້ນ | • ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ທີ່ເປັນຂອບແຜນງານຕົ້ນຕໍ<br>• ການປະສານງານພື້ນຖານ ຂອງການຊ່ວຍເຫຼືອ<br>• ບັນດາຍຸດທະສາດ ເບື້ອງຕົ້ນຂອງຂະແໜງການ |
| VD ສະບັບທີ II (2016–2025) | • ປັບປຸງລະບົບການວາງແຜນ<br>• ປັບປຸງ PFM<br>• ປະສິດທິຜົນ ຂອງການຊ່ວຍເຫຼືອ | • ວິທີການທີ່ກວ້າງຂວາງຕາມພາລະບົດບາດຂອງຂະແໜງການ<br>• ການຄຸ້ມຄອງການ ຊ່ວຍເຫຼືອ<br>• ມີຄວາມສອດຄ່ອງກັບ SDG ຫຼາຍຂຶ້ນ. |

DRAFT

| ໄລະຍະເວລາ | ຂົງເຂດຈຸດສຸມ | ອົງປະກອບທີ່ສຳຄັນ |
|---|---|---|
| VD ສະບັບທີ III (2026–2035) | • ຂອບແຜນງານການເງິນແຫ່ງຊາດທີ່ມີການເຊື່ອມສານກັນ: ການຊ່ວຍເຫຼືອທາງການພັດທະນາທີ່, ການເງິນ ພາກເອກະຊົນພາຍໃນ ແລະ ຕ່າງປະເທດ<br>• ການຄຸ້ມຄອງການຫຼຸດພົ້ນອອກຈາກປະເທດທີ່ດ້ອຍພັດທະນາ<br>• ການເງິນ ກັບການປ່ຽນແປງດິນຟ້າອາກາດ | • ລະບົບ ຄຸ້ມຄອງການເງິນພາກລັດ ມີຄວາມຄືບໜ້າ ແລະ ເລັ່ງລັດ ການ ປະຕິຮູບລະບົບສ່ວຍສາອາກອນ<br>• ແຫຼ່ງທີ່ມາຂອງການເງິນ ທີ່ຫຼາກຫຼາຍ ລວມການມີສ່ວນຮ່ວມຂອງພາກສ່ວນເອກະຊົນ ແລະ ການສົ່ງເສີມການລົງທຶນ.<br>• ການປົກຄອງຂັ້ນທ້ອງຖິ່ນ<br>• ສູນເຊື່ອມສານການເງິນ ດ້ານການປ່ຽນແປງດິນຟ້າອາກາດ ແລະຍືນຍົງ |

**ຫຼັກການທີ 2: ການມີສ່ວນຮ່ວມທີ່ມີຄຸນນະພາບ ແລະ ຫຼາກຫຼາຍຂອງທຸກພາກສ່ວນທີ່ກ່ຽວຂ້ອງ**

**29. ການທົບທວນຄວາມຄືບໜ້າ (2006–2025):** ສະພາບຂອງຄູ່ຮ່ວມພັດທະນາໃນ ສປປ ລາວ ໄດ້ມີການປ່ຽນແປງໂດຍ ຂະບວນການໂຕະມົນ ກາຍເປັນເວທີທີ່ມີປະສິດທິຜົນໃນການເຈລະຈາດ້ານນະໂຍບາຍ. ການມີສ່ວນຮ່ວມຂອງພາກເອກະຊົນໄດ້ເພີ່ມຂຶ້ນ ເຖິງແມ່ນວ່າສິ່ງທ້າທາຍຍັງຄົງຢູ່ໃນການສ້າງການມີສ່ວນຮ່ວມທີ່ມີຄວາມໝາຍ. ອົງການຈັດຕັ້ງສັງຄົມ ໄດ້ມີສ່ວນຮ່ວມຫຼາຍຂຶ້ນ, ໃນຂະນະທີ່ການຮ່ວມມື ລະຫວ່າງ ປະເທດທີ່ກຳລັງພັດທະນາດ້ວຍກັນກາຍເປັນສິ່ງເສີມສ້າງທີ່ສຳຄັນຂອງຄູ່ຮ່ວມພັດທະນາແບບດັ້ງເດີມ.

**30. ທິດທາງຕໍ່ໜ້າ (2026–2035):** ຈຸດສຸມຈະຫັນໄປສູ່ການລົງເລິກຄຸນນະພາບຂອງຄູ່ຮ່ວມພັດທະນາ ແທນທີ່ຈະເປັນການຂະຫຍາຍຂອບການຮ່ວມມື. ໃນນັ້ນລວມທັງການສ້າງກົນໄກທີ່ມີໂຄງສ້າງຫຼາຍຂຶ້ນເພື່ອໃຫ້ພາກເອກະຊົນພາຍໃນປະເທດມີສ່ວນຮ່ວມໃນການວາງແຜນພັດທະນາ ແລະ ການຈັດປະຕິບັດ ໂດຍສະເພາະແມ່ນຂະແໜງການບຸລິມະສິດ ເຊັ່ນ: ກະສິກຳ, ການທ່ອງທ່ຽວ, ພະລັງງານສະອາດ. ສະພາບແວດລ້ອມການເຄື່ອນໄຫວຂອງ ອົງການຈັດຕັ້ງສັງຄົມ ຈະໄດ້ຮັບການປັບປຸງໂດຍຜ່ານ ແນວທາງແນະນຳທີ່ຈະແຈ້ງກວ່າເກົ່າ ແລະ ມີກົນໄກການປຶກສາລືແລກປ່ຽນທີ່ເປັນປົກກະຕິກວ່າເກົ່າ. ການຮ່ວມມືຂອງປະເທດກຳລັງພັດທະນາດ້ວຍກັນ ແລະການຮ່ວມມືແບບສາມຫຼ່ຽມ ຈະໄດ້ຮັບການເສີມຂະຫຍາຍໂດຍຜ່ານການແລກປ່ຽນຄວາມຮູ້ຢ່າງເປັນລະບົບ ແລະໂຄງການສ້າງຂີດຄວາມສາມາດ. ການຮ່ວມມືພາກພື້ນຈະໄດ້ຮັບບຸລິມະສິດເພື່ອແກ້ໄຂສິ່ງທ້າທາຍຂ້າມຊາຍແດນເຊັ່ນ: ການປ່ຽນແປງຂອງດິນຟ້າອາກາດ, ການອຳນວຍຄວາມສະດວກດ້ານການຄ້າ ແລະ ການປົກປັກຮັກສາສິ່ງແວດລ້ອມ.

31. ດ້ວຍແຫຼ່ງທຶນຊ່ວຍເຫຼືອທາງການເພື່ອການພັດທະນາ ທີ່ ຫຼຸດລົງໃນ 10 ປີຂ້າງໜ້າ ແມ່ນເພື່ອຄົ້ນຄວ້າວ່າ ກອງທຶນເຫຼົ່ານີ້ສາມາດເປັນຕົວຊ່ວຍກະຕຸ້ນໃນການຂົນຂວາຍການສະໜອງທຶນໃຫ້ຫຼາຍກວ່າເກົ່າ ໄດ້ແນວໃດ ໂດຍສະເພາະຜ່ານຮູບແບບການສະໜອງທຶນແບບປະສົມປະສານ. ເພື່ອເຮັດໃຫ້ຂະບວນການນີ້ມີຄວາມຄືບໜ້ານັ້ນ, ລະບຽບການບໍລິຫານທີ່ວ່ອງໄວ ແລະ ມີປະສິດທິຜົນແມ່ນສຳຄັນທີ່ສຸດ. ປັບປຸງຂະບວນການເຫຼົ່ານີ້ບໍ່ພຽງແຕ່ຈະເພີ່ມທະວີການຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອທາງການເພື່ອການພັດທະນາເທົ່ານັ້ນ ແຕ່ຍັງຍົກສູງປະສິດທິຜົນລວມຂອງຂໍ້ລິເລີ່ມພັດທະນາ.

| ໄລຍະເວລາ | ຂົງເຂດຈຸດສຸມ | ອົງປະກອບສຳຄັນ |
|---|---|---|
| VD ສະບັບທີ I (2006–2015) | • ປະສານງານພື້ນຖານກັບຜູ້ໃຫ້ທຶນ<br>• ການປຶກສາຫາລື ເບື້ອງຕົ້ນ ກັບພາກເອກະຊົນ<br>• ການມີສ່ວນຮ່ວມຂອງອົງການຈັດຕັ້ງສັງຄົມນຳກັດ | • ກອງປະຊຸມໂຕະມົນ<br>• ຂະບວນການປຶກສາຫາລືທີ່ເປັນພື້ນຖານ<br>• ການຮ່ວມມື ທີ່ສຸມໃສ່ຜູ້ໃຫ້ທຶນ |
| VD ສະບັບທີ II (2016–2025) | • ການມີສ່ວນຮ່ວມຂອງຫຼາຍພາກສ່ວນທີ່ກ່ຽວຂ້ອງ<br>• ຍົກສູງ ບົດບາດຂອງ ເອກະຊົນ<br>• ຂະຫຍາຍພື້ນທີ່ການມີສ່ວນຮ່ວມຂອງ ອົງການຈັດຕັ້ງ ສັງຄົມ | • ໜ່ວຍງານຂະແໜງການ<br>• ການປຶກສາຫາລື ພາກລັດ-ເອກະຊົນ<br>• ການຮ່ວມມືຂອງປະເທດທີ່ກຳລັງພັດທະນາດ້ວຍກັນ (ແບບໃຕ້-ໃຕ້ ແລະ ສາມຫຼ່ຽມ) |
| VD ສະບັບທີ III (2026–2035) | • ຄຸນນະພາບ ຂອງຄູ່ຮ່ວມມື<br>• ການເຊື່ອມສານກັບພາກພື້ນ<br>• ການຮ່ວມມື ຂ້າມຊາຍແດນ<br>• ທຶນຊ່ວຍເຫຼືອລ້າ ທີ່ເປັນສິ່ງຕໍ່ຍອດໃນການຂົນຂວາຍແຫຼ່ງທຶນທີ່ໃຫຍ່ກວ່າເກົ່າ | • ປັບປຸງຄືນຂະບວນການໂຕະມົນ<br>• ການມີສ່ວນຮ່ວມຂອງພາກເອກະຊົນທີ່ມີໂຄງສ້າງ ລວມທັງການເຊື່ອມໂຍງຂະບວນການໂຕະມົນກັບກອງປະຊຸມນັກທຸລະກິດລາວ, ປັບປຸງສະພາບແວດລ້ອມການມີສ່ວນຮ່ວມ ຂອງອົງການທາງສັງຄົມ<br>• ຂອບການຮ່ວມມືໃນພາກພື້ນ<br>• ລະບຽບການບໍລິຫານທີ່ໄວ ແລະ ມີປະສິດທິພາບ ເນື່ອງຈາກການປັບປຸງຂະບວນການເຫຼົ່ານີ້ບໍ່ພຽງແຕ່ຈະເສີມຂະຫຍາຍການຄຸ້ມຄອງກະແສ ODA ເທົ່ານັ້ນ ແຕ່ຍັງປັບປຸງປະສິດທິພາບລວມຂອງຂໍ້ລິເລີ່ມການພັດທະນາ. |

**ຫຼັກການທີ 3: ການວາງແຜນທີ່ອີງໃສ່ຜົນໄດ້ຮັບ**

**32. ການທົບທວນຄວາມຄືບໜ້າ (2006–2025):** ສປປ ລາວ ໄດ້ມີບາດກ້າວອັນສຳຄັນ ໃນການຈັດຕັ້ງປະຕິບັດ ກອບແຜນງານ ຜົນສຳເລັດ ການພັດທະນາ ແລະ ການປັບປຸງຂີດຄວາມສາມາດທາງສະຖິຕິ ຕັ້ງແຕ່ປີ 2006 ຫາ 2025. ການປະເມີນຄັ້ງນີ້ ແມ່ນອີງໃສ່ ຜົນການທົບທວນການຮ່ວມມືເພື່ອການພັດທະນາທີ່ມີປະສິດທິຜົນໃນລະດັບສາກົນ (GPEDC) ໂດຍຊີ້ໃຫ້ເຫັນ ການປັບປຸງທີ່ດີຂຶ້ນ ຂອງລະບົບ ການຕິດຕາມກວດກາ ຂອງປະເທດ ແລະກົນໄກການລາຍງານທີ່ດີກວ່າເກົ່າ ສຳລັບຕົວຊີ້ວັດທີ່ສຳຄັນ, ປະກອບສ່ວນເຂົ້າໃນຂະບວນການຕັດສິນໃຈທີ່ມີຂໍ້ມູນຫຼາຍຂຶ້ນ.

33. ຢ່າງໃດກໍ່ຕາມ, ເຖິງວ່າຈະມີການພັດທະນາໃນທາງບວກເຫຼົ່ານີ້ ແຕ່ກໍຍັງມີສິ່ງທ້າທາຍຢູ່ ໂດຍສະເພາະໃນຂອບເຂດຂອງຄຸນນະພາບຂໍ້ມູນ ແລະຕາມກອບເວລາ. ໃນຂະນະທີ່ລະບົບສະຖິຕິແຫ່ງຊາດໃຫ້ຂໍ້ມູນທີ່ເຊື່ອຖືໄດ້ສຳລັບຕົວຊີ້ວັດບາງອັນ, ມີຄວາມຈຳເປັນຢ່າງຍິ່ງ ສຳລັບຂໍ້ມູນທີ່ ແຍກລະອຽດ ເພື່ອສະໜັບສະໜູນການວິເຄາະ "ການບໍ່ປ່ອຍປະໄວ້ໃຜຢູ່ ຂ້າງຫຼັງ" (LNOB), ດັ່ງທີ່ໄດ້ເນັ້ນໜັກໄວ້ໃນເປົ້າໝາຍການພັດທະນາແບບຍືນຍົງ (SDG) ການທົບທວນແບບສະໝັກໃຈ ລະດັບຊາດ (VNR) 3. ການຂາດ ຂໍ້ມູນທີ່ມີການແຍກລະອຽດນັ້ນ ແມ່ນເປັນຂໍ້ຈຳກັດ ຄວາມອາດສາມາດໃນຂະບວນການຕິດຕາມກວດກາ ທີ່ມີປະສິດທິຜົນ ໃນປະຊາກອນແຕ່ລະກຸ່ມ ແລະ ເປັນການກີດກັ້ນ ຄວາມພະຍາຍາມ ໃນການລະບຸ ແລະ ແກ້ໄຂ ຄວາມບໍ່ເທົ່າທຽມ ທີ່ມີໃນພົນລະເມືອງ.

34. ນອກຈາກນັ້ນ, ໃນຂະນະທີ່ການປະຕິບັດການປະເມີນຜົນໄດ້ກາຍເປັນລະບົບຫຼາຍຂຶ້ນ, ຊຸກຍູ້ການຕັດສິນໃຈໂດຍອີງໃສ່ຫຼັກຖານ, ຊ່ອງຫວ່າງຂອງຂໍ້ມູນ ທີ່ບໍ່ໄດ້ແຍກລາຍລະອຽດ ນັ້ນ ເປັນອຸປະສັກທີ່ສຳຄັນທີ່ຈະເຂົ້າໃຈຜົນກະທົບຂອງ ຂໍ້ລິເລີ່ມການພັດທະນາ ໂດຍບໍ່ມີຂໍ້ມູນທີ່ຊັດເຈນ ທີ່ສະແດງໃຫ້ເຫັນປະສົບການທີ່ຫຼາກຫຼາຍຂອງພາກສ່ວນຕ່າງໆຂອງສັງຄົມ, ມັນຈະກາຍເປັນສິ່ງທ້າທາຍທີ່ຈະສ້າງນະໂຍບາຍ ທີ່ນອນໃນ ເປົ້າໝາຍທີ່ ແກ້ໄຂຄວາມຕ້ອງການສະເພາະຂອງກຸ່ມຄົນດ້ອຍໂອກາດ.

**35. ທິດທາງຕໍ່ໜ້າ (2026–2035):** ທິດສະວັດຕໍ່ໜ້າ ຈະສຸມໃສ່ການສ້າງນະໂຍບາຍທີ່ອີງໃສ່ຫຼັກຖານໃນທຸກລະດັບຂອງລັດຖະບານ. ໃນນີ້ລວມທັງການເສີມສ້າງລະບົບສະຖິຕິແຫ່ງຊາດເພື່ອ ສ້າງຂໍ້ມູນທີ່ໜ້າເຊື່ອຖືໄດ້, ທັນເວລາໃນການຕັດສິນໃຈ, ໂດຍເນັ້ນໜັກໃສ່ຂໍ້ມູນທີ່ແຍກລາຍລະອຽດ ເພື່ອຮັບປະກັນບໍ່ປ່ອຍປະໃຜໄວ້ຂ້າງຫຼັງຕາມ ທີ່ໄດ້ລະບຸໄວ້ໃນ SDG VNR 3 ທີ່ລັດຖະບານ ສປປ ລາວ ວາງອອກໃນປີ 2024. ການພິຈາລະນາວຽກງານການປ່ຽນແປງດິນຟ້າອາກາດຈະ ເຊື່ອມສານເຂົ້າໃນຂອບແຜນງານຂອງຜົນສຳເລັດ ເພື່ອຕິດຕາມຄວາມທົນທານ ແລະການປັບຕົວໄດ້ດີຂຶ້ນ. ລັດຖະບານຈະ ປັບປຸງລະບົບການຕິດຕາມກວດກາ ແລະປະເມີນຜົນຂອງຕົນໂດຍສຸມໃສ່ຜົນສຳເລັດແທນທີ່ຈະພຽງແຕ່ຜົນໄດ້ຮັບ. ດິຈິຕອນ ຈະໄດ້ຕໍ່ຍອດໃນການປັບປຸງການເກັບກຳຂໍ້ມູນ, ການວິເຄາະ, ແລະ ການເຜີຍແຜ່.

DRAFT

| ໄລຍະເວລາ | ຂົງເຂດຈຸດສຸມ | ອົງປະກອບສຳຄັນ |
|---|---|---|
| **VD** ສະບັບທີ<br>**I** (2006–2015) | • ລະບົບການຕິດຕາມຂັ້ນພື້ນຖານ<br>• ການລາຍງານທີ່ອີງໃສ່ຜົນໄດ້ຮັບ ແລະ ການປະເມີນຜົນ<br>• ກອບຜົນສຳເລັດ ເບື້ອງຕົ້ນ<br>• ການລິເລີ່ມຜົນໄດ້ຮັບອີງໃສ່ຂອບການຮ່ວມມື | • ສະຖິຕິຂັ້ນ ພື້ນພານ<br>• ການຕິດຕາມ ຂັ້ນໂຄງການ<br>• ການປະເມີນຜົນທີ່ມີຂໍ້ຈຳກັດ |
| **VD** ສະບັບທີ<br>**II** (2016–2025) | • ປັບປຸງ ຂອບການຮ່ວມມືທີ່ອີງໃສ່ຜົນໄດ້ຮັບຂອງການຕິດຕາມ ແລະ ປະເມີນຜົນ<br>• ປັບປຸງ ລະບົບການຕິດຕາມ<br>• ຄວາມອາດສາມາດດ້ານສະຖິຕິທີ່ດີຂຶ້ນ | • ຜົນສຳເລັດ ຂອງຂະແໜງການ<br>• ການຕິດຕາມ ແລະ ປະເມີນຜົນລະດັບຊາດ<br>• ລະບົບການລາຍງານ ທີ່ເປັນປົກກະຕິ |
| **VD** ສະບັບທີ<br>**III** (2025–2035) | • ການສ້າງນະໂຍບາຍທີ່ອີງໃສ່ຂໍ້ມູນຕົວຈິງ<br>• ລະບົບການຕິດຕາມ ແລະປະເມີນຜົນແບບ ດີຈີຕອລ<br>• ແຜນງານຂອບການຮ່ວມມືທີ່ຄຳນຶງເຖິງວຽກງານການປ່ຽນແປງດິນຟ້າອາກາດ | • ສຸມໃສ່ຜົນສຳເລັດ<br>• ລະບົບຂໍ້ມູນ ທີ່ມີການເຊື່ອມສານຮອມທັງ ການຕໍ່ຍອດ FMIS<br>• ການວິເຄາະ ທີ່ມີຄວາມກ້າວໜ້າ |

**ຫຼັກການທີ 4: ຄວາມໂປ່ງໃສ ແລະ ຄວາມຮັບຜິດຊອບຮ່ວມກັນ**

**36. ການທົບທວນຄວາມຄືບໜ້າ (2006–2025):** ການປະຕິບັດລະບົບການຄຸ້ມຄອງຂໍ້ມູນການຊ່ວຍເຫຼືອໄດ້ປັບປຸງຄວາມໂປ່ງໃສໃນການຮ່ວມມືເພື່ອການພັດທະນາຫຼາຍຂຶ້ນ. ຂອບຄວາມຮັບຜິດຊອບຮ່ວມກັນ ແລະກັນໄດ້ພັດທະນາຈາກການລາຍງານຂັ້ນພື້ນຖານໄປສູ່ກົນໄກການທົບທວນທີ່ມີຄວາມເລິກເຊິ່ງກວ່າເກົ່າ. ແນວໃດກໍຕາມ, ຂອບຄວາມຮັບຜິດຊອບຮ່ວມກັນບໍ່ໄດ້ມີເປົ້າໝາຍລະດັບປະເທດສຳລັບລັດຖະບານ ແລະ ຄູ່ຮ່ວມພັດທະນາເພື່ອປະເມີນຄວາມຄືບໜ້າຮ່ວມກັນຢ່າງເປັນປົກກະຕິ, ການປະເມີນທີ່ມີສ່ວນຮ່ວມ ຫຼື ການໃຫ້ຜົນການປະເມີນໃຫ້ທັນເວລາ ແລະ ສາທາລະນະສາມາດເຂົ້າເຖິງຂໍ້ມູນໄດ້. ສປປ ລາວ ໄດ້ມີບາດກ້າວທີ່ພົ້ນເດັ່ນໃນການປັບປຸງລະບົບການຄຸ້ມຄອງການເງິນພາກລັດ (PFM) ໂດຍສະເພາະໃນດ້ານການກວດສອບ ແລະ ຂະບວນການຈັດຊື້. ການປະຕິຮູບໃນໄລຍະມໍ່ໆມານີ້ໄດ້ປັບປຸງກົນໄກກວດສອບ, ເຮັດໃຫ້ມີການປັບປຸງປະສິດທິຜົນການກວດກາທັງພາຍໃນ ແລະ ຕ່າງປະເທດ. ຄວາມພະຍາຍາມເຫຼົ່ານີ້ໄດ້ປະກອບສ່ວນເຂົ້າໃນການກວດສອບລາຍຈ່າຍພາກລັດຫຼາຍຂຶ້ນ ແລະເພີ່ມຄວາມຮັບຜິດຊອບພາຍໃນບັນດາຂະແໜງການຂອງລັດຖະບານ. ນອກຈາກນັ້ນ, ຂະບວນການຈັດຊື້ໄດ້ເຫັນວ່າມີການປະຕິຮູບເພື່ອແນໃສ່ເພີ່ມ

ທະວີປະສິດທິພາບ ແລະ ຄວາມໂປ່ງໃສ, ອັນສຳຄັນແມ່ນຮັບປະກັນໃຫ້ແຫຼ່ງຊັບພະຍາກອນຂອງລັດ ຖືກນຳໃຊ້ຢ່າງມີປະສິດທິຜົນ. ການພັດທະນາໃນທາງບວກເຫຼົ່ານີ້ສະແດງໃຫ້ເຫັນຄວາມມຸ່ງໝັ້ນໃນການປັບປຸງການປົກຄອງ ແລະ ການສົ່ງເສີມສະພາບແວດລ້ອມທາງດ້ານການເງິນທີ່ຮັບຜິດຊອບຫຼາຍຂຶ້ນ.

37. ເຖິງວ່າຈະມີຄວາມກ້າວໜ້າທີ່ໂດດເດັ່ນດັ່ງກ່າວມາຂ້າງເທິງນັ້ນ ກໍຍັງມີສິ່ງທ້າທາຍຢູ່ ເຊິ່ງກີດກັ້ນປະສິດທິພາບໂດຍລວມ. ຂະບວນການງົບປະມານຍັງເປັນຮູບແບບ ຈາກເທິງ - ລົງລຸ່ມ ເຊິ່ງຈຳກັດຄວາມຍືດຢຸ່ນ ແລະ ການຕອບໂຕ້ຕໍ່ສະພາບເສດຖະກິດທີ່ປ່ຽນແປງ ເຮັດໃຫ້ການຈັດສັນງົບປະມານອາດບໍ່ສອດຄ່ອງກັບບຸລິມະສິດຂອງຊາດ. ນອກຈາກນັ້ນ, ຄວາມອາດສາມາດຈຳກັດສຳລັບງົບປະມານໄລຍະກາງເຮັດໃຫ້ການວາງແຜນຍຸດທະສາດ ແລະການຈັດສັນທຶນ ມີຄວາມຫຍຸ້ງຍາກ. ໃນການລາຍງານດ້ານການເງິນ, ໃນຂະນະທີ່ມີການປັບປຸງບາງສ່ວນ ແຕ່ຄວາມບໍ່ສອດຄ່ອງ, ຄວາມຊັກຊ້າໃນການກະກຽມບົດລາຍງານ ແລະ ມີຄວາມຈຳກັດ ໃນການໄປຕາມມາດຕະຖານສາກົນຍັງເປັນບັນຫາສຳຄັນ. ທາງດ້ານວຽກງານການກວດສອບ ເຖິງແມ່ນວ່າຈະເຂັ້ມແຂງ ແຕ່ຍັງປະເຊີນກັບສິ່ງທ້າທາຍທີ່ກ່ຽວຂ້ອງກັບຄວາມເປັນເອກະລາດ ແລະ ຄວາມສາມາດຂອງສະຖາບັນໃນການກວດສອບ, ໂດຍຍັງມີຂໍ້ຈຳກັດ ໃນການຕິດຕາມຂໍ້ສະເໜີແນະ ແລະ ຈຳກັດ ສາທາລະນະເຂົ້າເຖິງບົດລາຍງານການກວດສອບ ທີ່ກະທົບຕໍ່ຄວາມຜິດຊອບທີ່ມີຄວາມໂປ່ງໄສ. ເຊັ່ນດຽວກັນນັ້ນ, ການປະຕິຮູບວຽກງານການຈັດຊື້ແມ່ນ ຍັງເຮັດບໍ່ໄດ້ດີໂດຍການປະຕິບັດລະບຽບການທີ່ບໍ່ສອດຄ່ອງ, ຄວາມສາມາດຈຳກັດຂອງເຈົ້າໜ້າທີ່ຈັດຊື້ ແລະການເຂົ້າເຖິງຂໍ້ມູນຂອງສາທາລະນະທີ່ບໍ່ພຽງພໍໃນການຈັດຊື້ ເຊິ່ງເພີ່ມຄວາມສ່ຽງຕໍ່ປະສິດທິພາບ. ການແກ້ໄຂສິ່ງທ້າທາຍທີ່ເຊື່ອມໂຍງກັນເຫຼົ່ານີ້ແມ່ນມີຄວາມຈຳເປັນສຳລັບການເພີ່ມຄວາມຮັບຜິດຊອບ, ຄວາມໂປ່ງໃສ ແລະ ການນຳໃຊ້ທຶນຂອງລັດ ໃນສປປລາວຢ່າງມີປະສິດທິຜົນ.

**38. ທິດທາງຕໍ່ໜ້າ (2026–2035):** ກົນໄກຄວາມໂປ່ງໃສ ແລະ ຄວາມຮັບຜິດຊອບຈະຖືກປັບປຸງໃຫ້ທັນສະໄໝ ໂດຍຜ່ານການຫັນເປັນດິຈິຕອລ ໂດຍຜ່ານຮູບແບບການຄຸ້ມຄອງການຊ່ວຍເຫຼືອຖືກຍົກລະດັບຂຶ້ນເພື່ອ ນຳເອົາທຸກຮູບແບບຂອງການເງິນເພື່ອການພັດທະນາ ລວມທັງການເງິນທີ່ຕິດພັນກັບວຽກດິນຟ້າອາກາດ ແລະ ການລົງທຶນຂອງເອກະຊົນ. ຂອບການຕ້ານການສໍ້ລາດບັງຫຼວງ ຈະໄດ້ຮັບການປັບປຸງໂດຍຜ່ານລະບົບການກວດສອບແລະກົນໄກການກວດກາສາທາລະນະ. ຂະບວນການຈັດຊື້ຈະເປັນດິຈິຕອນເພື່ອປັບປຸງປະສິດທິພາບແລະຫຼຸດຜ່ອນຄວາມສ່ຽງການສໍ້ລາດບັງຫຼວງ. ການລາຍງານການເງິນພາກລັດຈະໄດ້ຮັບການປັບປຸງໂດຍຜ່ານການພິມເຜີຍແຜ່ເປັນປົກກະຕິຂອງບົດລາຍງານທີ່ສາມາດເຂົ້າເຖິງແລະ ສ້າງຄວາມເຂັ້ມແຂງໜ້າທີ່ການກວດສອບ.

39. ໂດຍສະເພາະຄວາມຮັບຜິດຊອບຮ່ວມກັນໃນການຮ່ວມມືເພື່ອການພັດທະນາ ແມ່ນມີຄວາມຈຳເປັນສຳລັບການສົ່ງເສີມຄວາມໂປ່ງໃສ ແລະ ຮັບປະກັນວ່າທຸກພາກສ່ວນມີສ່ວນຮ່ວມຢ່າງຫ້າວຫັນໃນຂະບວນການຕັດສິນໃຈ. ການທົບທວນຄືນການຮ່ວມມືດ້ານການພັດທະນາຢ່າງເປັນລະບົບ, ມີສ່ວນຮ່ວມ ແລະຮ່ວມກັນທົບທວນຜົນສຳເລັດ ການຮ່ວມມືດ້ານການພັດທະນາ ຈະລວມມີທຸກພາກສ່ວນທີ່ກ່ຽວຂ້ອງ ແລະ ແຕ່ລະພາກສ່ວນໄດ້ປະກອບສ່ວນທັດສະນະ ແລະ ຄວາມຊ່ຽວຊານທີ່ມີລັກສະນະສະເພາະຂອງຕົນ.
ສະຖາບັນຂອງລັດຖະບານ, ລວມທັງພະນັກງານຂັ້ນສູນກາງ ແລະ ທ້ອງຖິ່ນ ຕະຫຼອດຮອດສະມາຊິກສະພາແຫ່ງຊາດ, ມີບົດບາດສຳຄັນໂດຍການໃຫ້ຄວາມເຂົ້າໃຈໃນການຈັດວາງນະໂຍບາຍ ແລະ ການຈັດສັນງົບປະມານ, ຮັບປະກັນວ່າ ຂໍ້ລິເລີ່ມການພັດທະນາຕອບສະໜອງຄວາມຕ້ອງການຂອງ ປະຊາຊົນ.

- ຄູ່ຮ່ວມພັດທະນາ ເຊັ່ນ: ຜູ້ໃຫ້ທຶນສອງຝ່າຍ ແລະ ຫຼາຍຝ່າຍ, ຄຽງຄູ່ກັບບັນດາອົງການບໍ່ ສັງກັດລັດຖະບານ (NGOs), ສະເໜີໃຫ້ມີການປະເມີນປະສິດທິຜົນຂອງທຶນຮອນ ແລະ ຄວາມເຂົ້າໃຈຂັ້ນພື້ນຖານ ໃນການຈັດຕັ້ງປະຕິບັດໂຄງການ;
- ການມີສ່ວນຮ່ວມຂອງຜູ້ຕາງໜ້າພາກເອກະຊົນສາມາດເສີມຂະຫຍາຍການທົບທວນເຫຼົ່ານີ້ຕື່ມອີກ, ຍ້ອນວ່າທຸລະກິດນຳເອົາທຶນຮອນ ແລະວິທີແກ້ໄຂໃໝ່ໆທີ່ສາມາດຂັບເຄື່ອນການພັດທະນາແບບຍືນຍົງ;
- ອົງການຈັດຕັ້ງຊຸມຊົນ ແລະ ການເຄື່ອນໄຫວຂອງຮາກຖານແມ່ນມີຄວາມສຳຄັນຕໍ່ການເປັນຕົວແທນຂອງທາງສຽງຂອງຜູ້ໄດ້ຮັບຜົນກະທົບໂດຍກົງຈາກ ຂໍ້ລິເລີ່ມການພັດທະນາ, ຮັບປະກັນຄວາມຕ້ອງການ ແລະ ບູລິມະສິດຂອງທ້ອງຖິ່ນ;
- ນອກຈາກນັ້ນ, ສະຖາບັນການສຶກສາ ແລະ ການຄົ້ນຄວ້າປະກອບສ່ວນເຂົ້າໃນການວິເຄາະຫຼັກຖານທີ່ແຈ້ງໃນການຕັດສິນໃຈ, ໃນຂະນະທີ່ຜູ້ໄດ້ຮັບຜົນປະໂຫຍດໂດຍກົງໃຫ້ຄຳຄິດເຫັນທີ່ມີຄວາມສຳຄັນຕໍ່ຜົນກະທົບຂອງໂຄງການພັດທະນາ;
- ການມີສ່ວນຮ່ວມຂອງສື່ມວນຊົນຍັງມີຄວາມສຳຄັນ, ຍ້ອນວ່າພວກເຂົາຊ່ວຍເຜີຍແຜ່ຂໍ້ມູນຂ່າວສານ ແລະ ສົ່ງເສີມການຮັບຮູ້ຂອງປະຊາຊົນ, ດັ່ງນັ້ນການສົ່ງເສີມຄວາມຮັບຜິດຊອບ;
- ສຸດທ້າຍ, ອົງການຈັດຕັ້ງສາກົນ, ເຊັ່ນ: ອົງການສະຫະປະຊາຊາດ, ສາມາດອຳນວຍຄວາມສະດວກໃຫ້ແກ່ການປະຕິບັດທີ່ດີທີ່ສຸດໃນການຕິດຕາມ ແລະ ປະເມີນຜົນ.

ໂດຍການຮວບຮວມ ເອົາພາກສ່ວນທີ່ກ່ຽວຂ້ອງທີ່ຫຼາກຫຼາຍນີ້ ເຂົ້າໃນຂະບວນການທົບທວນ, ຄວາມຮັບຜິດຊອບເຊິ່ງກັນແລະ ສາມາດສ້າງຄວາມເຂັ້ມແຂງຢ່າງຍິ່ງ, ນຳໄປສູ່ ຜົນສຳເລັດຂອງການພັດທະນາ ທີ່ຍືນຍົງ ແລະ ມີປະສິດທິຜົນຍິ່ງຂຶ້ນ ເຊິ່ງມີຄວາມສອດຄ່ອງກັບຄວາມຕ້ອງການ ແລະ ບູລິມະສິດຕ່າງໆ ຂອງພາກສ່ວນທີ່ເຂົ້າຮ່ວມທັງໝົດ.

| ໄລຍະເວລາ | ຂົງເຂດຈຸດສຸມ | ອົງປະກອບສຳຄັນ |
|---|---|---|
| **VD** ສະບັບທີ **I** (2006–2015) | • ລະບົບລາຍງານຂັ້ນພື້ນຖານ<br>• ມາດຕະການ ຕໍ່ຄວາມຮັບຜິດຊອບເບື້ອງຕົ້ນ<br>• ຄວາມໂປ່ງໃສ ມີຈຳກັດ | • ຖານຂໍ້ມູນການຊ່ວຍເຫຼືອຂັ້ນພື້ນຖານ<br>• ການທົບທວນປະຈຳປີ<br>• ການລາຍງານຕໍ່ ຜູ້ໃຫ້ທຶນ |
| **VD** ສະບັບທີ **II** (2016–2025) | • ການຄຸ້ມຄອງຂໍ້ມູນ ການຊ່ວຍເຫຼືອ<br>• ປັບປຸງການທົບທວນຮ່ວມກັນ<br>• ລະບົບກວດສອບ ໄດ້ຮັບການປັບປຸງ | • ການລາຍງານ ເປັນດິຈິຕອລ<br>• ການທົບທວນຮ່ວມກັນ<br>• ການເປີດຂໍ້ມູນ ຕໍ່ສາທາລະນະ |
| **VD** ສະບັບທີ **III** (2026–2035) | • ລະບົບຄວາມໂປ່ງໃສ ເປັນດິຈິຕອລ<br>• ການກວດສອບ ທີ່ມີຄວາມລະອຽດ<br>• ສຸມໃສ່ ການຕ້ານການສໍ້ລາດບັງຫຼວງ | • ມີການເຊື່ອມໂຍງບັນດາຂໍ້ມູນ<br>• ການຕິດຕາມກວດກາຂອງ ສາທາລະນະ<br>• ການລາຍງານ ຕາມເວລາຕົວຈິງ |

**ຫຼັກການທີ 5: ຄວາມອາດສາມາດໃນການຄາດຄະເນ ແລະ ຄວາມສອດຄ່ອງ**

40. ການທົບທວນຄວາມຄືບໜ້າ (2006–2025): ຄາດຄະເນການຊ່ວຍເຫຼືອໃນ ສປປ ລາວໄດ້ສະແດງໃຫ້ເຫັນຄວາມຄືບ  ໜ້າທີ່ມີດ້ານດີ ແລະ ຂໍ້ຄົງຄ້າງ ໂດຍມີການປັບປຸງການຄາດຄະເນໃນແຕ່ລະປີ ອີງໃສ່ການປະສານງານຮ່ວມກັບ ຄູ່ຮ່ວມພັດທະນາ. ຢ່າງໃດກໍ່ຕາມ, ສິ່ງທ້າທາຍຍັງມີຢູ່ ໂດຍສະເພາະໃນການຄາດຄະເນໄລຍະກາງ ແລະແຜນການລາຍຈ່າຍໃນຕໍ່ຫນ້າເຊິ່ງໄດ້ຫຼຸດລົງ. ການປັບປຸງຂະບວນການວາງແຜນລະດັບແຫ່ງຊາດໄດ້ປະກອບສ່ວນເຂົ້າໃນການປັບປຸງບາງສ່ວນ ແຕ່ຂໍ້ມູນທີ່ສະຫນອງໂດຍຄູ່ຮ່ວມພັດທະນາຍັງບໍ່ທັນສອດຄ່ອງກັນເຮັດໃຫ້ການວາງແຜນທາງດ້ານການເງິນໃນໄລຍະຍາວສັບສົນ ແລະບໍ່ທັນຊັດເຈນ. ການປະສານງານຂອງຜູ້ໃຫ້ທຶນໄດ້ຮັບການປັບປຸງ ໂດຍສະເພາະແມ່ນຜ່ານບັນດາຄະນະເຮັດວຽກຂອງຂະແໜງການ ແຕ່ການແບ່ງແຍກ ຍັງເປັນສິ່ງທ້າທາຍ ເຊິ່ງຂັດຂວາງປະສິດທິຜົນລວມຂອງການໃຫ້ການຊ່ວຍເຫຼືອ. ວິທີການທີ່ອີງໃສ່ຮູບແບບແຜນງານ ຍັງໄດ້ໃຫ້ຜົນໄດ້ຮັບໃນທາງບວກໃນຫຼາຍຂະແຫນງການ, ໂດຍສະເພາະແມ່ນການສຶກສາ ແລະສຸຂະພາບ, ສະແດງໃຫ້ເຫັນທ່າແຮງສໍາລັບຍຸດທະສາດການຊ່ວຍເຫຼືອແບບປະສົມປະສານ ແລະມີປະສິດທິພາບຫຼາຍຂຶ້ນ. ການແກ້ໄຂຊ່ອງຫວ່າງຂອງການຄາດຄະເນໃນໄລຍະກາງ ແລະ ຮັບປະກັນວ່າຄູ່ຮ່ວມພັດທະນາສະໜອງແຜນການລາຍຈ່າຍໃນຕໍ່ໜ້າທີ່ຄົບຖ້ວນ ຈະເປັນສິ່ງສຳຄັນໃນການເພີ່ມຄວາມອາດສາມາດ ແລະ ປະສິດທິຜົນລວມຂອງການຊ່ວຍເຫຼືອໃນ ສປປ ລາວ.

41. ການນໍາໃຊ້ລະບົບຕ່າງໆຂອງປະເທດໃນ ສປປ ລາວ ໄດ້ເພີ່ມຂຶ້ນເທື່ອລະກ້າວ ໂດຍສະເພາະດ້ານການຄຸ້ມຄອງການເງິນພາກລັດ (PFM) ແລະ ການຈັດຊື້. ຂໍ້ມູນທີ່ຜ່ານມາຊີ້ໃຫ້ເຫັນເຖິງການເພີ່ມຂຶ້ນຂອງການນໍາໃຊ້ລະບົບ PFM, ມີ 47% ລາຍງານໃນການສໍາຫຼວດ GPEDC ຄັ້ງທີ 4 ທຽບກັບ 42% ໃນປີ 2018. ເຖິງຢ່າງໃດກໍຕາມ, ເຖິງວ່າຈະມີຄວາມຄືບໜ້ານີ້ກໍ່ຕາມ ແຕ່ການນໍາໃຊ້ໂດຍລວມຂອງລະບົບພາຍໃນປະເທດນີ້ໂດຍຄູ່ຮ່ວມມືພັດທະນາຍັງມີຄວາມຈໍາກັດ ໂດຍສະແດງໃຫ້ເຫັນຕົວເລກດຽວກັນຄື 47%. ນີ້ສະທ້ອນໃຫ້ເຫັນພາບລວມກ່ຽວກັບທັງການຄາດຄະເນການຊ່ວຍເຫຼືອ ແລະການຮັບຮອງເອົາລະບົບ PFM. ໃນຂະນະທີ່ການຄາດຄະເນປະຈໍາປີໄດ້ຮັບການປັບປຸງດີຂຶ້ນ ແຕ່ຍັງມີສິ່ງທ້າທາຍໃນການຄາດຄະເນກາງໄລຍະ ແລະການສ້າງແຜນການລາຍຈ່າຍທີ່ຄາດຄະເນໄວ້ລ່ວງຫນ້າ ເຊິ່ງໄດ້ຫຼຸດລົງ. ດັ່ງນັ້ນ, ມັນເປັນສິ່ງສໍາຄັນທີ່ຈະຮັບຮູ້ຜົນໄດ້ຮັບ ທີ່ທັງດ້ານລວກ ແລະລົບ ເຫຼົ່ານີ້ໃນເວລາທີ່ປຶກສາຫາລືກ່ຽວກັບການນໍາໃຊ້ລະບົບພາຍໃນປະເທດຄູ່ຮ່ວມພັດທະນາໃນ ສປປ ລາວ. ການເພີ່ມທະວີການຄາດຄະເນການຊ່ວຍເຫຼືອ ແລະ ເພີ່ມທະວີການນໍາໃຊ້ລະບົບຕ່າງໆ ຂອງປະເທດຈະເປັນສິ່ງສໍາຄັນເພື່ອຊຸກຍູ້ການຮ່ວມມືພັດທະນາຢ່າງມີປະສິດທິຜົນ ແລະ ຍືນຍົງຍິ່ງຂຶ້ນ.

42. ທິດທາງໃນຕໍ່ໜ້າ (2026–2035): ກອບການສະໜອງທຶນໄລຍະກາງໃນ ສປປ ລາວ ຈະໄດ້ຮັບການປັບປຸງໃຫ້ສອດຄ່ອງກັບຮອບວຽນການວາງແຜນລະດັບແຫ່ງຊາດ ແລະ ຍຸດທະສາດຂອງຂະແໜງການ, ຮັບປະກັນໃຫ້ຄວາມພະຍາຍາມໃນການພັດທະນາມີຄວາມຮັດກຸມ ແລະ ສອດຄ່ອງກັບບູລິມະສິດຂອງປະເທດ. ອົງປະກອບທີ່ສໍາຄັນຂອງຂະບວນການນີ້ແມ່ນການ ສ້າງຄວາມເຂັ້ມແຂງໃນການຕິດຕາມກວດກາຂອງສະພາແຫ່ງຊາດ ເຊິ່ງປັດຈຸບັນຍັງມີຄວາມຈໍາກັດ ອີງຕາມຜົນການຕິດຕາມກວດກາຂອງການຮ່ວມມືເພື່ອການພັດທະນາທີ່ມີປະສິດຕິຜົນສາກົນ (GPEDC). ໃນນີ້ລວມມີການສະໜອງຂໍ້ມູນການຮ່ວມມືດ້ານການພັດທະນາຢ່າງເປັນປົກກະຕິຕໍ່ສະພາແຫ່ງຊາດ ແລະ

DRAFT

ອັດຕາສ່ວນຂອງກອງທຶນການຮ່ວມມືພັດທະນາທີ່ບັນທຶກໄວ້ໃນງົບປະມານແຫ່ງຊາດ ເຊິ່ງທັງສອງຂໍ້ແມ່ນມີຄວາມສໍາຄັນຕໍ່ການຄຸ້ມຄອງບໍລິຫານທີ່ມີປະສິດຜົນ ແລະ ມີຄວາມຮັບຜິດຊອບສູງ. ຄວາມພະຍາຍາມສ້າງຄວາມກົມກຽວຈະສຸມໃສ່ການຫຼຸດຜ່ອນຄ່າໃຊ້ຈ່າຍໃນທຸລະກໍາໂດຍຜ່ານ ການກະກຽມ ການວາງແຜນ, ການສະໜອງທຶນ, ການຕິດຕາມ, ແລະການລາຍງານ. ເພາະສະນັ້ນ ຈຶ່ງນາໄປສູ່ ການປັບປຸງຂະບວນການທີ່ກະທັດຮັດ ແລະເພີ່ມປະສິດທິພາບ.ນອກຈາກນັ້ນ, ການເງິນດ້ານດິນຟ້າອາກາດຈະຖືກ ເຊື່ອມສານເຂົ້າໃນກົນໄກການປະສານງານທີ່ມີຢູ່ແລ້ວເພື່ອຫຼີກເວັ້ນການສ້າງຕັ້ງໂຄງສ້າງການຈັດຕັ້ງຕື່ມອີກ, ຮັບປະກັນວິທີການໜຶ່ງດຽວ ໃນການແກ້ໄຂບັນຫາສິ່ງທ້າທາຍດ້ານສິ່ງແວດລ້ອມ. ບັນດາຄູ່ຮ່ວມມືພັດທະນາຈະໄດ້ຮັບການຊຸກຍູ້ໃຫ້ມີ ຄໍາໝັ້ນສັນຍາຫຼາຍປີທີ່ສາມາດຄາດຄະເນໄດ້ຕື່ມອີກ ທີ່ສອດຄ່ອງກັບບັນດາບຸລິມະສິດຂອງຊາດ, ຊຸກຍູ້ຄວາມໝັ້ນຄົງ ແລະ ການວາງແຜນການໃນໄລຍະຍາວ. ແຜນງານຮ່ວມຈະໄດ້ຮັບການສົ່ງເສີມເພື່ອຫຼຸດຜ່ອນການ ກະແຈກກະຈາຍ ແລະ ຍົກສູງປະສິດທິຜົນການພັດທະນາ ໂດຍເອົາໃຈໃສ່ເປັນພິເສດເຖິງວິທີການທີ່ກົມກຽວກັນໃນການຮັບມືກັບການປ່ຽນແປງຂອງດິນຟ້າອາກາດ, ການຫຼຸດຜ່ອນຄວາມສ່ຽງໄພພິບັດ ແລະ ການປົກປັກຮັກສາສິ່ງແວດລ້ອມ. ການເສີມຂະຫຍາຍບັນດາຂົງເຂດເຫຼົ່ານີ້ຈະປະກອບສ່ວນເຂົ້າໃນຂອບການຮ່ວມມືພັດທະນາຢ່າງມີປະສິດທິຜົນ ແລະ ມີຄວາມຮັບຜິດຊອບໃນ ສປປ ລາວ.

| ໄລຍະເວລາ | ຂົງເຂດຈຸດສຸມ | ອົງປະກອບທີ່ສໍາຄັນ |
|---|---|---|
| **VD** ສະບັບທີ<br>**I** (2006–2015) | • ການປະສານງານ ການຊ່ວຍເຫຼືອ ຂັ້ນພື້ນຖານ<br>• ຄວາມພະຍາຍາມເບື້ອງຕົ້ນ ໃນການສ້າງຄວາມກົມກຽວສອດຄ່ອງ<br>• ວິທີການ ທີ່ອີງໃສ່ລະດັບໂຄງການ | • ຄໍາໝັ້ນສັນຍາ ປະຈໍາປີ<br>• ມີຫຼາຍລະບົບ ໃນເວລາດຽວກັນ<br>• ການປະສານງານທີ່ມີຈໍາກັດ |
| **VD** ສະບັບທີ<br>**II** (2016–2025) | • ການຄາດຄະເນ ໄດ້ຮັບການປັບປຸງ<br>• ການປະສານງານ ທີ່ໄດ້ຮັບການປັບປຸງ<br>• ການນໍາໃຊ້ລະບົບຕ່າງໆ ຂອງປະເທດ | • ການວາງແຜນຫຼາຍປີ<br>• ແຜນງານຮ່ວມກັນ<br>• ວິທີການຂັ້ນ ຂະແໜງການ |
| **VD** ສະບັບທີ<br>**III** (2026–2035) | • ກອບແຜນງານ ກາງໄລຍະ<br>• ການເຊື່ອມສານການເງິນດ້ານການປ່ຽນແປງດິນຟ້າອາກາດ<br>• ຄວາມສອດຄ່ອງກົມກຽວ ຢ່າງເປັນລະບົບ | • ການວາງແຜນທີ່ມີການ ເຊື່ອມສານ<br>• ການປັບປຸງ ວຽກງານຕິດຕາມກວດກາຂອງສະພາ<br>• ຂັ້ນຕອນທີ່ເປັນມາດຕະຖານ ດຽວກັນ |

ພ້ອມນີ້, ເພື່ອຮັບປະກັນວິທີການ ໃນການແກ້ໄຂບັນຫາສິ່ງທ້າທາຍດ້ານສິ່ງແວດລ້ອມ. ບັນດາຄູ່ຮ່ວມມືພັດທະນາຈະໄດ້ຮັບການຊຸກຍູ້ໃຫ້ມີຄໍາໝັ້ນສັນຍາຫຼາຍປີທີ່ສາມາດຄາດຄະເນໄດ້ຕື່ມອີກ ທີ່ສອດຄ່ອງກັບບັນດາບຸລິມະສິດຂອງຊາດ, ຊຸກຍູ້ຄວາມໝັ້ນຄົງ ແລະ ການວາງແຜນການໃນໄລຍະຍາວ. ແຜນງານຮ່ວມຈະໄດ້ຮັບການສົ່ງເສີມເພື່ອຫຼຸດຜ່ອນການກະແຈກກະຈາຍ ແລະ ຍົກສູງປະສິດທິຜົນການພັດທະນາ ໂດຍເອົາໃຈໃສ່ເປັນພິເສດເຖິງ

ວິທີການທີ່ກົມກຽວກັນໃນການຮັບມືກັບການປ່ຽນແປງຂອງດິນຟ້າອາກາດ, ການຫຼຸດຜ່ອນຄວາມສ່ຽງໄພພິບັດ ແລະ ການປົກປັກຮັກສາສິ່ງແວດລ້ອມ. ການເສີມຂະຫຍາຍບັນດາຂົງເຂດເຫຼົ່ານີ້ຈະປະກອບສ່ວນເຂົ້າໃນຂອບການຮ່ວມມືພັດທະນາຢ່າງມີປະສິດທິຜົນ ແລະ ມີຄວາມຮັບຜິດຊອບໃນ ສປປ ລາວ.

| ໄລຍະເວລາ | ຂົງເຂດຈຸດສຸມ | ອົງປະກອບທີ່ສຳຄັນ |
|---|---|---|
| **VD ສະບັບທີ່** I (2006–2015) | • ການປະສານງານ ການຊ່ວຍເຫຼືອ ຂັ້ນພື້ນຖານ<br>• ຄວາມພະຍາຍາມເບື້ອງຕົ້ນ ໃນການສ້າງຄວາມກົມກຽວສອດຄ່ອງ<br>• ວິທີການ ທີ່ອີງໃສ່ລະດັບໂຄງການ | • ຄຳໝັ້ນສັນຍາ ປະຈຳປີ<br>• ມີຫຼາຍລະບົບ ໃນເວລາດຽວກັນ<br>• ການປະສານງານທີ່ມີຈຳກັດ |
| **VD ສະບັບທີ່** II (2016–2025) | • ການຄາດຄະເນ ໄດ້ຮັບການປັບປຸງ<br>• ການປະສານງານ ທີ່ໄດ້ຮັບການປັບປຸງ<br>• ການນຳໃຊ້ລະບົບຕ່າງໆ ຂອງປະເທດ | • ການວາງແຜນຫຼາຍປີ<br>• ແຜນງານຮ່ວມກັນ<br>• ວິທີການຂັ້ນ ຂະແໜງການ |

**ຫຼັກການ 6: ການເສີມສ້າງຄວາມອາດສາມາດເພື່ອການພັດທະນາທີ່ຍືນຍົງ**

**43. ການທົບທວນຄວາມຄືບໜ້າ (2006–2025):** ການພັດທະນາຂີດຄວາມສາມາດຂອງສະຖາບັນໃນ ສປປ ລາວ ໄດ້ພັດທະນາຢ່າງຕັ້ງໜ້າ, ຫັນປ່ຽນຈາກໂຄງການຝຶກອົບຮົມສ່ວນບຸກຄົນໄປສູ່ການສຸມໃສ່ສ້າງຄວາມເຂັ້ມແຂງໃຫ້ແກ່ສະຖາບັນທັງໝົດ. ການປ່ຽນແປງນີ້ໄດ້ຮັບ ຄວາມອຳນວຍຄວາມສະດວກໂດຍການຊ່ວຍເຫຼືອດ້ານວິຊາການໃນໄລຍະຍາວ ເຊິ່ງໄດ້ເພີ່ມທະວີການຍົກສູງຄວາມສາມາດດ້ານວິຊາການ ແລະ ຊຸກຍູ້ການເຊື່ອມໂຍງດ້ານວິຊາການຢ່າງເລິກເຊິ່ງໃນລະບົບລັດຖະບານ. ດັ່ງນັ້ນ, ຂອບແຜນງານຂອງສະຖາບັນ, ໂດຍສະເພາະແມ່ນການວາງແຜນ ແລະການຄຸ້ມຄອງການເງິນ ໄດ້ຮັບການປັບປຸງທີ່ດີຂຶ້ນ, ເຮັດໃຫ້ການຄຸ້ມຄອງບໍລິຫານ ແລະ ການຈັດສັນທຶນທີ່ມີປະສິດທິພາບຫຼາຍຂຶ້ນ. ແນວໃດກໍ່ຕາມ, ຍ້ອນວ່າ ສປປ ລາວ ກຽມຄວາມພ້ອມໃນການຮ່ວມມືພັດທະນາໄລຍະຕໍ່ໄປ, ມັນເປັນສິ່ງຈຳເປັນເພື່ອແກ້ໄຂບັນດາສິ່ງທ້າທາຍທີ່ພວມຂົ່ມຂູ່ຕໍ່ຄວາມຍືນຍົງຂອງຄວາມກ້າວໜ້າເຫຼົ່ານີ້.

44. ບັນຫາສຳຄັນແມ່ນການຮັກສາບຸກຄະລາກອນທີ່ມີຄວາມຊຳນິຊຳນານ ຍ້ອນວ່າຜູ້ປະກອບອາຊີບທີ່ໄດ້ຮັບການຝຶກອົບຮົມຫຼາຍຄົນມັກຈະຍ້າຍໄປບ່ອນອື່ນທີ່ມີໂອກາດດີກວ່າ ເຊິ່ງເຮັດໃຫ້ຄວາມຮູ້ ແລະ ຄວາມຊ່ຽວຊານຂອງສະຖາບັນຫຼຸດໜ້ອຍຖອຍລົງ. ນອກຈາກນັ້ນ, ຄວາມຍືນຍົງຂອງການລິເລີ່ມການສ້າງຄວາມອາດສາມາດແມ່ນມີຄວາມສ່ຽງ ຍ້ອນບໍ່ມີການສະໜັບສະໜູນຢ່າງຕໍ່ເນື່ອງ ແລະການສະໜອງທຶນທີ່ບໍ່ພຽງພໍ ເຊິ່ງເປັນສິ່ງຈຳເປັນສຳລັບການຮັກສາ ແລະ ເສີມຂະຫຍາຍຜົນເລັດທີ່ຍາດມາໄດ້ນັ້ນ. ເພື່ອສືບຕໍ່ການພັດທະນາຄວາມສາມາດດ້ານສະຖາບັນໃນທົດສະວັດຕໍ່ໜ້າ, ການຮ່ວມມືດ້ານການພັດທະນາຢູ່ ສປປ ລາວ ຄວນໃຫ້ບຸລິມະສິດຫຼາຍຂໍ້ລິເລີ່ມຍຸດທະສາດ.

45. ກ່ອນອື່ນໝົດ, ການສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການຮັກສາພະນັກງານທີ່ມີທັກສະແມ່ນມີຄວາມສຳຄັນ; ນີ້ສາມາດບັນລຸໄດ້ໂດຍການໃຫ້ຄ່າຕອບແທນທີ່ດີຂຶ້ນກ່ວາເກົ່າ, ໂອກາດຄວາມກ້າວໜ້າຂອງວຽກງານ, ແລະ ການສະໜັບສະໜູນ ໃນສະຖານທີ່ເຮັດວຽກ. ນອກຈາກນັ້ນ, ການເຊື່ອມໂຍງການພັດທະນາຊັບພະຍາກອນມະນຸດເຂົ້າໃນຄວາມພະຍາຍາມສ້າງຄວາມອາດສາມາດແມ່ນສຳຄັນ ເນື່ອງຈາກວ່າການລົງທຶນໃນການສຶກສາ ແລະການຝຶກອົບຮົມກຳລັງແຮງງານຈະຮັບປະກັນ ການສ້າງບຸກຄົນທີ່ມີທັກສະໃນອະນາຄົດ ພ້ອມທີ່ຈະປະກອບສ່ວນເຂົ້າໃນເປົ້າໝາຍຂອງສະຖາບັນ. ສອງ, ການເຊື່ອມໂຍງການພັດທະນາຄວາມສາມາດພາຍໃນຍຸດທະສາດພັດທະນາແຫ່ງຊາດ ແລະ ຮັບປະກັນຄວາມສອດຄ່ອງກັບບຸລິມະສິດຂອງຂະແໜງການຈະເພີ່ມຄວາມສອດຄ່ອງ ແລະ ມີກະທົບທີ່ດີຂອງວຽກງານດັ່ງກ່າວ. ອັນນີ້ຕ້ອງການວິທີການຮ່ວມມືທີ່ຄູ່ຮ່ວມພັດທະນາເຮັດວຽກຢ່າງໃກ້ຊິດກັບລັດຖະບານລາວເພື່ອເຮັດໃຫ້ ບັນດາແຜນງານໂຄງການ ສາມາດຕອບສະໜອງໄດ້ຄວາມຕ້ອງການອັນສະເພາະຂອງສະຖາບັນ.

46. ນອກຈາກນັ້ນ, ການສົ່ງເສີມວັດທະນະທຳຂອງການຮຽນຮູ້ຢ່າງຕໍ່ເນື່ອງ ແລະ ການແບ່ງປັນຄວາມຮູ້ພາຍໃນສະຖາບັນ ຈະເປັນສິ່ງສຳຄັນສຳລັບ ການຮັກສາໄດ້ ບັນດາທັກສະທີ່ໄດ້ມາໂດຍຜ່ານໂຄງການຝຶກອົບຮົມ. ຄູ່ຮ່ວມພັດທະນາຄວນສຸມໃສ່ການເສີມສ້າງຄວາມເປັນເຈົ້າການຂອງທ້ອງຖິ່ນ ໃນຄວາມພະຍາຍາມສ້າງຂີດຄວາມສາມາດ, ການສ້າງຄວາມເຂັ້ມແຂງໃຫ້ສະຖາບັນຂອງ ສປປ ລາວ ເປັນຜູ້ນຳໃນຂະບວນການພັດທະນາຂອງເຂົາເຈົ້າ. ການສ້າງຄວາມຄືບໜ້າໃນດ້ານດີ ດ້ວຍການຈັດຕັ້ງປະຕິບັດເປົ້າໝາຍເພື່ອຜ່ານຜ່າສິ່ງທ້າທາຍທີ່ມີຢູ່ ລວມທັງການເນັ້ນໜັກໃສ່ການພັດທະນາຊັບພະຍາກອນມະນຸດ, ສປປ ລາວ ສາມາດເສີມຂະຫຍາຍຄວາມສາມາດຂອງສະຖາບັນຢ່າງມີປະສິດທິຜົນ, ປູທາງໄປສູ່ການປົກຄອງທີ່ເຂັ້ມແຂງ ແລະ ການປັບປຸງຜົນສຳເລັດຂອງການພັດທະນາໃນຕໍ່ໜ້າ.

**47. ທິດທາງໃນຕໍ່ໜ້າ (2026–2035):** ການພັດທະນາຄວາມອາດສາມາດໃນ ສປປ ລາວ ຈະໃຫ້ບຸລິມະສິດໃນການກໍ່ສ້າງສະຖາບັນທີ່ມີຄວາມ ທົນທານ ໂດຍມີຄວາມພ້ອມໃນການຄຸ້ມຄອງສິ່ງທ້າທາຍດ້ານການພັດທະນາທີ່ສັບສົນຢ່າງມີປະສິດທິຜົນ. ຈຸດສຸມຍຸດທະສາດນີ້ແມ່ນສຳຄັນໃນສະພາບການທີ່ປະເທດປະເຊີນໜ້າກັບບັນຫາອັນຮີບດ່ວນເຊັ່ນ: ການປ່ຽນແປງຂອງດິນຟ້າອາກາດ, ການຫັນເປັນຕົວເມືອງຢ່າງວ່ອງໄວ, ແລະ ຄວາມຈຳເປັນໃນການເຕີບໂຕເສດຖະກິດແບບຍືນຍົງ. ຈະໄດ້ເນັ້ນໜັກໃສ່ການເພີ່ມທະວີຄວາມສາມາດຕ້ານທານ ຕໍ່ກັບດິນຟ້າອາກາດໃນທົ່ວຂະແໜງການ ແລະ ທຸກລະດັບຂອງລັດຖະບານ. ໂດຍການເສີມເພີ່ມຂີດຄວາມສາມາດຂອງສະຖາບັນໃນການປັບຕົວ ແລະ ຫຼຸດຜ່ອນຜົນກະທົບຈາກການປ່ຽນແປງດິນຟ້າອາກາດ, ສປປ ລາວ ສາມາດປົກປ້ອງຜົນປະໂຫຍດຈາກການພັດທະນາ ແລະ ຮັບປະກັນຄວາມຍືນຍົງຂອງຊັບພະຍາກອນທຳມະຊາດ.

48. ນອກຈາກຄວາມທົນທານຕໍ່ດິນຟ້າອາກາດແລ້ວ, ການເສີມສ້າງຄວາມສາມາດໃນການຫັນເປັນດິຈິຕອລ ແມ່ນມີຄວາມຈຳເປັນໃນການເຮັດໃຫ້ການບໍລິການສາທາລະນະທັນສະໄໝ ແລະ ປັບປຸງປະສິດທິພາບໂດຍລວມ. ໃນຂະນະທີ່ໂລກຫັນໄປສູ່ການແກ້ໄຂບັນຫາທີ່ອາໄສດິຈິຕອລຫຼາຍຂຶ້ນ, ການໃຫ້ເຈົ້າໜ້າທີ່ລັດຖະບານມີທັກສະທີ່ຈຳເປັນ ທາງດ້ານເຕັກໂນໂລຊີດິຈິຕອລຈະປັບປຸງຂະບວນການ, ປັບປຸງຄວາມໂປ່ງໃສ, ແລະປັບປຸງການມີສ່ວນຮ່ວມຂອງພົນລະເມືອງ. ການຫັນປ່ຽນນີ້ແມ່ນມີຄວາມກ່ຽວຂ້ອງໂດຍສະເພາະໃນ ສປປ ລາວ ທີ່ການຮູ້ ກ່ຽວກັບດິຈິຕອລ ກາລັງພັດທະນາຢູ່,

DRAFT

ແລະມີທ່າແຮງອັນສຳຄັນທາງດ້ານເຕັກໂນໂລຊີເພື່ອປັບປຸງການບໍລິການດ້ານການສຶກສາ, ສາທາລະນະສຸກ ແລະ ບໍລິຫານລັດ.

49. ນອກຈາກນັ້ນ, ການພັດທະນາທັກສະການຄຸ້ມຄອງພື້ນຖານໂຄງລ່າງແບບຍືນຍົງແມ່ນມີຄວາມສຳຄັນຕໍ່ການຮັບປະກັນການບຳລຸງຮັກສາ ແລະ ປະສິດທິຜົນຂອງການລົງທຶນຂອງລັດໃນໄລຍະຍາວ. ຍ້ອນວ່າ ສປປ ລາວ ສືບຕໍ່ລົງທຶນໃນໂຄງການກໍ່ສ້າງພື້ນຖານໂຄງລ່າງ, ມັນມີຄວາມສຳຄັນຫຼາຍທີ່ສະຖາບັນຕ້ອງມີຄວາມຮູ້ ແລະ ຄວາມສາມາດໃນການຄຸ້ມຄອງຊັບສິນເຫຼົ່ານີ້ຢ່າງຍືນຍົງ. ນີ້ປະກອບມີການຝຶກອົບຮົມບຸກຄະລາກອນໃນການຄຸ້ມຄອງໂຄງການ, ການວາງແຜນການບຳລຸງຮັກສາແລະການຈັດສັນຊັບພະຍາກອນເພື່ອເຮັດໃຫ້ຜົນປະໂຫຍດສູງສຸດຂອງການລົງທຶນພື້ນຖານໂຄງລ່າງໃນຂະນະທີ່ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ.

50. ເພື່ອສະຫນັບສະຫນູນຂໍ້ລິເລີ່ມເຫຼົ່ານີ້, ກົນໄກການເງິນໃຫມ່, ລວມທັງການເງິນ ດ້ານການປ່ຽນແປງ ດິນຟ້າອາກາດ ແລະການເງິນ ທີ່ເຊື່ອສານ ຈາກຫຼາຍແຫຼ່ງ ຈະເປັນສິ່ງຈຳເປັນ. ຮູບແບບການສະໜອງທຶນເຫຼົ່ານີ້ຕ້ອງການໂຄງການສ້າງຄວາມອາດສາມາດ ສະເພາະ ເພື່ອຮັບປະກັນວ່າສະຖາບັນຂອງລັດຖະບານສາມາດເຂົ້າເຖິງ, ຄຸ້ມຄອງ, ແລະນຳໃຊ້ທຶນເຫຼົ່ານີ້ຢ່າງມີປະສິດທິຜົນ. ໂດຍການພັດທະນາຄວາມສາມາດທີ່ຈຳເປັນ ໃນການຈັດຕັ້ງປະຕິບັດ ທາງເລືອກດ້ານການເງິນທີ່ມີຫົວຄິດປະດິດສ້າງ, ສປປ ລາວ ສາມາດລະດົມທຶນເພີ່ມເຕີມໃຫ້ແກ່ໂຄງການພັດທະນາທີ່ສອດຄ່ອງກັບບຸລິມະສິດຂອງຊາດ.

51. ການແກ້ໄຂສິ່ງທ້າທາຍທີ່ເກີດຈາກການເຂົ້າ-ອອກ ຂອງພະນັກງານແມ່ນອີກດ້ານໜຶ່ງທີ່ສຳຄັນຂອງການພັດທະນາຄວາມສາມາດ. ຈະເນັ້ນໃສ່ຄວາມຮູ້ຕໍ່ສະຖາບັນ ແລະການຄຸ້ມຄອງອົງຄວາມຮູ້ ເພື່ອຫຼຸດຜ່ອນຜົນກະທົບຂອງການສູນເສຍບຸກຄະລາກອນທີ່ມີປະສົບການ. ການປະຕິບັດລະບົບການແບ່ງປັນຄວາມຮູ້, ເອກະສານ, ແລະການໃຫ້ຄຳປຶກສາຈະຊ່ວຍຮັກສາຄວາມເຂົ້າໃຈທີ່ມີຄຸນຄ່າ ແລະຄວາມຊຳນານພາຍໃນສະຖາບັນ, ຮັບປະກັນຄວາມຍືນຍົງ ແລະສະຖຽນລະພາບໃນການຄຸ້ມຄອງ ແລະ ການບໍລິການ.

| ໄລຍະເວລາ | ຂົງເຂດຈຸດສຸມ | ອົງປະກອບສຳຄັນ |
| --- | --- | --- |
| **VD ສະບັບທີ່** I (2006–2015) | • ການຝຶກອົບຮົມ ສົມສ່ວນບຸກຄົນ<br>• ການຖ່າຍທອດ ທັກສະພື້ນຖານ<br>• ການສ້າງຄວາມອາດສາມາດ ທີ່ອີງໃສ່ໂຄງການ | • ການຝຶກອົບຮົມໄລຍະສັ້ນ<br>• ການຊ່ວຍເຫຼືອດ້ານວິຊາການ<br>• ຄວາມຍືນຍົງຍັງຈຳກັດ |
| **VD ສະບັບທີ່** II (2016–2025) | • ການສ້າງຄວາມເຂັ້ມແຂງແກ່ສະຖາບັນ<br>• ການພັດທະນາບັນດາລະບົບ<br>• ການຖ່າຍທອດຄວາມຮູ້ | • ວິທີການໄລຍະຍາວ<br>• ຈຸດສຸມຂອງ ອົງການ<br>• ການຮັກສາໄວ້ ທີ່ດີກວ່າເກົ່າ |

DRAFT

| ໄລຍະເວລາ | ຂົງເຂດຈຸດສຸມ | ອົງປະກອບສຳຄັນ |
|---|---|---|
| **VD ສະບັບທີ່** III (2026–2035) | • ຄວາມອາດສາມາດທີ່ທົນທານຕໍ່ການປ່ຽນແປງດິນຟ້າອາກາດ<br>• ການຫັນປ່ຽນສູ່ ດິຈິຕອລ<br>• ກົນໄກການເງິນແບບໃໝ່ | • ຄວາມທົນທານຂອງສະຖາບັນ<br>• ບັນດາລະບົບຕ່າງໆມີຄວາມຍືນຍົງ |

## III. ການສ້າງຮູບແບບລັກສະນະຂອງການປະສານງານ.

52. ວິວັດທະນາການ ການຮ່ວມມືດ້ານການພັດທະນາໃນ ສປປ ລາວ ຈຳເປັນຕ້ອງມີການຫັນປ່ຽນພື້ນຖານຂອງກົນໄກການປະສານງານຂອງພວກເຮົາ. ໃນຂະນະທີ່ຂະບວນການໂຕະມົນ (RTP) ໄດ້ເປັນເວທີສຳຄັນຂອງການປຶກສາຫາລືແລກປ່ຽນ ຂອງວຽກງານການພັດທະນາໃນໄລຍະ 2 ທົດສະວັດທີ່ຜ່ານມາ, ການຈັດຕັ້ງປະຕິບັດຖະແຫຼງການວຽງຈັນວ່າດ້ວຍປະສິດທິຜົນດ້ານການຊ່ວຍເຫຼືອ ແລະ ການພັດທະນາຄວາມສາມາດ (VDCAP) (2016–2025) ສະແດງໃຫ້ເຫັນເຖິງຄວາມຈຳເປັນຂອງວິທີການທີ່ເໝາະ, ຮັດກຸມກວ່າເກົ່າ, ຕອບສະໜອງຕໍ່ສະພາບການພັດທະນາທີ່ມີການປ່ຽນແປງ. ການຫັນປ່ຽນນີ້ແມ່ນມີຄວາມສຳຄັນເປັນພິເສດ ເນື່ອງຈາກ ຄວາມຫຼາກຫຼາຍຂອງແຫຼ່ງການເງິນ ເພື່ອການພັດທະນາ ເຊິ່ງປັດຈຸບັນໄດ້ຂະຫຍາຍຕົວ ເໜືອ ການຊ່ວຍເຫຼືອດ້ານການພັດທະນາຢ່າງເປັນທາງການ (ODA).

**53. ສິ່ງທ້າທາຍດ້ານການຈັດກອງປະຊຸມ:** ເພື່ອເຮັດໃຫ້ ຂະບວນການໂຕະມົນມີປະສິດທິຜົນໃນລາວ, ມັນເປັນສິ່ງຈຳເປັນທີ່ຈະເຮັດໃຫ້ການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງຢ່າງມີຄວາມໝາຍ ແລະ ມີຄຸນຄ່າຫຼາຍຂຶ້ນ. ການປັບປຸງຂອບເຂດຂັ້ນຕອນການຈັດຕັ້ງ ແລະກອງປະຊຸມປະສານງານ ແມ່ນສຳຄັນເພື່ອຮັບປະກັນວ່າຜົນໄດ້ຮັບຈາກກອງປະຊຸມແບບບໍ່ເປັນທາງການ ແລະສະເພາະກິດ-ເຊັ່ນ: ການຕັດສິນໃຈ, ການລະດົມຄວາມຄິດ, ຫຼືຄວາມເຂົ້າໃຈທີ່ເລິກເຊິ່ງ-ຖືກປະຕິບັດຢ່າງມີກຽດ ຄືກັນກັບກອງປະຊຸມທີ່ເປັນທາງການ. ກອງປະຊຸມທີ່ດຳເນີນໄປດ້ວຍ ການເຂົ້າຮ່ວມ ເຊິ່ງໜ້າ ແລະທາງໄກ ນັ້ນສາມາດສົ່ງເສີມການມີສ່ວນຮ່ວມຢ່າງຕໍ່ເນື່ອງ ແລະຫຼີກລ່ຽງການຈັດກອງປະຊຸມ ນອກກອບເວລາ ທີ່ກຳນົດໄວ້ ເຮັດໃຫ້ມີຄວາມສະດວກຂຶ້ນສຳລັບພາກສ່ວນກ່ຽວຂ້ອງ. ຍິ່ງໄປກວ່ານັ້ນ, ການຮັບຮອງເອົາໂຄງສ້າງກອງປະຊຸມທີ່ເປັນທາງການໜ້ອຍລົງ ຍັງສາມາດຊຸກຍູ້ການພົວພັນແບບເປີດກວ້າງ ແລະ ເຄື່ອນໄຫວລະຫວ່າງບັນດາຄູ່ຮ່ວມພັດທະນາ ແລະ ບັນດາກະຊວງຂະແໜງການ, ຊ່ວຍໃຫ້ມີການປຶກສາຫາລືຢ່າງມີຫົວຄິດປະດິດສ້າງ ແລະ ການຮ່ວມມືແກ້ໄຂບັນຫາໄດ້ດີຍິ່ງຂຶ້ນ.

54. ການປະຕິບັດມາດຕະຖານສຳລັບການຈັດການ ແລະການລາຍງານຜົນໄດ້ຮັບຈາກກອງປະຊຸມທີ່ບໍ່ເປັນທາງການແມ່ນມີສຳຄັນ. ຮັບປະກັນວ່າຈຸດສຳຄັນ, ລາຍລະອຽດ, ຫຼືໜ້າວຽກທີ່ຈະຕ້ອງຈັດຕັ້ງປະຕິບັດ ແລະເອົາເຂົ້າໃນບົດລາຍງານ ຂອງກອງປະຊຸມທີ່ເປັນທາງການຂອງຂະແໜງການ (SWG) ທີ່ຈະໄດ້ ຂໍຄຳເຫັນ ຈາກຄະນະຊີ້ນຳ ແລະຮັບປະກັນວ່າຜົນສຳເລັດ ສະທ້ອນໃຫ້ເຫັນເຖິງເປົ້າໝາຍຮ່ວມກັນ ຂອງທຸກພາກສ່ວນທີ່ກ່ຽວຂ້ອງ. ການໃຊ້ເຄື່ອງມືດ້ານເທັກໂນໂລຍີ - ເຊັ່ນ: ປະຕິທິນໃຊ້ຮ່ວມກັນ, ພື້ນທີ່ການກຳນົດເວລາ, ລະບົບການຈັດການໜ້າວຽກ ແລະ ແອັບພລິເຄຊັ່ນ AI – ສາມາດແບ່ງເບົາພາລະການບໍລິຫານໄດ້ຢ່າງຫຼວງຫຼາຍ ແລະ ປັບປຸງຂະບວນການປະສານງານ. ຍົກຕົວຢ່າງ, ປະຕິທິນທີ່

DRAFT

ໃຊ້ຮ່ວມກັນ ສາມາດຊ່ວຍຫຼີກຫຼ່ຽງຕາຕະລາງຕຳກັນ, ຜູ້ຈັດການວຽກງານສາມາດຮັບປະກັນວ່າ ໜ້າວຽກທີ່ຈະຕ້ອງປະຕິບັດງານໄດ້ຮັບການຕິດຕາມຢ່າງໃກ້ຊິດ, ແລະແອັບພລິເຄຊັນທີ່ໃຊ້ AI ສາມາດສ້າງບົດບັນທຶກກອງປະຊຸມ ໄດ້ທັນເວລາ, ເພີ່ມປະສິດທິພາບຂອງການສື່ສານ.

55. ນອກຈາກນັ້ນ ບັນດາຂໍ້ແນະນຳຕ່າງໆ ຄວນໄດ້ຮັບການປັບປຸງ ຕາມການຊີ້ນຳຂອງປະທານ ແລະປະທານຮ່ວມຂອງກອງປະຊຸມ ກ່ຽວກັບຂໍ້ກຳນົດໃຫມ່ໃນດຳລັດສະບັບປັບປຸງຂອງນາຍົກລັດຖະມົນຕີກ່ຽວກັບການສ້າງຕັ້ງຄະນະກຳມະການແຫ່ງຊາດ ສຳລັບກອງປະຊຸມໂຕະມົນ. ດຳລັດສະບັບນີ້ອະທິບາຍເຖິງອົງປະກອບຂອງກອງເລຂາກອງປະຊຸມຂະແໜງການ (SWG) ແລະ ເຮັດໃຫ້ກອງເລຂາໂຕະມົນ (RTP) ກ່ຽວກັບຄວາມຮັບຜິດຊອບໃນການຕິດຕາມກວດກາ. ການປະເມີນວ່າການປ່ຽນແປງເຫຼົ່ານີ້ ຈະແກ້ໄຂຂໍ້ບົກຜ່ອງດ້ານການເຮັດວຽກຂອງກອງປະຊຸມຂະແໜງການຍ່ອຍ (SWGs) ໂດຍສະເພາະໃນດ້ານປະສິດທິພາບ ແລະ ຄວາມສັບສົນທາງດ້ານ ຂັ້ນຕອນຕ່າງໆ ໄດ້ຫຼືບໍ່ນັ້ນແມ່ນເປັນຂອດສຳຄັນ. ການຊຸກຍູ້ການສ້າງນະໂຍບາຍກ້າວສູ່ການຈັດຕັ້ງປະຕິບັດທີ່ເຊື່ອມຕໍ່ກິດຈະກຳ ຂອງຂະແໜງການຍ່ອນ (SWG) ແລະ ກ້າວສູ່ຈຸດປະສົງນະໂຍບາຍສະເພາະ ຫຼືຄຳຫມັ້ນສັນຍາໃນລະດັບທີ່ສູງຂຶ້ນ ທີ່ເພີ່ມຄວາມຮັບຜິດຊອບ. ການທົບທວນກິດຈະກຳ ທີ່ກ່ຽວກັບນະໂຍບາຍຢ່າງເປັນປົກກະຕິ ຄວນປະເມີນວ່າກອງປະຊຸມຂະແໜງການຍ່ອຍນັ້ນສາມາດ ປະກອບສ່ວນຕາມຄວາມມຸ່ງຫວັງ ຂອງນະໂຍບາຍລະດັບສູງ, ການນາໃຊ້ງົບປະມານ, ການນຳໃຊ້ຕົວຊີ້ວັດຜົນຂອງການເຮັດວຽກທີ່ອີງໃສ່ຜົນສຳເລັດ ເພື່ອສ້າງຜົນປະໂຫຍດໂດຍມີຄ່າໃຊ້ຈ່າຍໜ້ອຍແຕ່ມີຄຸນຄ່າສູງໄດ້ແທ້ບໍ່.

56. ການສ້າງຄວາມເຂັ້ມແຂງ ທາງດ້ານການປະສານງານລະຫວ່າງຂະແໜງການແມ່ນມີຄວາມສຳຄັນຕໍ່ການຫຼຸດຜ່ອນການເຮັດພໍໃຜພໍມັນ ແລະ ສົ່ງເສີມການສົມທົບກັນລະຫວ່າງຄູ່ຮ່ວມພັດທະນາ ແລະ ພາກລັດ. ໂດຍການໝູນໃຊ້ເຄື່ອງມືດ້ານເທັກໂນໂລຢີ ເຊັ່ນ: ແພຣດຟອມຕ່າງໆ ຂອງດິຈິຕອລ ທີ່ໃຊ້ຮ່ວມກັນເພື່ອແລກປ່ຽນເອກະສານ ແລະ ການສື່ສານໃນເວລາຈິງ, ຊ່ວຍໃຫ້ການປະສານງານລະຫວ່າງ ຂະແໜງການ ມີປະສິດທິພາບຫຼາຍຂຶ້ນກວ່າເກົ່າ. ນອກຈາກນັ້ນການແນະນຳທີ່ຊຸກຍູ້ການແລກປ່ຽນຂໍ້ມູນ ລະຫວ່າງ ຂະແໜງການຍ່ອຍ ຈະເຮັດໃຫ້ການຮ່ວມມື ທີ່ມີຫຼັກຖານຂໍ້ມູນຈະແຈ້ງຂຶ້ນ, ໃນຂະນະທີ່ການຮັບຮອງເອົາວິທີການແລກປ່ຽນຂໍ້ມູນທີ່ສອດຄ່ອງ ແລະ ປອດໄພຈະຊ່ວຍເພີ່ມຄວາມໄວ້ວາງໃຈ ແລະ ປະສິດທິພາບຂອງບັນດາ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ.

57. ການຮັບຮູ້ວ່າຂະບວນການທີ່ເຂັ້ມງວດ, ມີຈຸດສູນກາງ, ຫຼືຂະບວນການທີ່ເປັນອັນດຽວກັນ ສາມາດມີທັງຂໍ້ໄດ້ປຽບແລະຂໍ້ຈຳກັດ, ການປຶກສາຫາລືເພີ່ມເຕີມແມ່ນຈຳເປັນເພື່ອເຂົ້າໃຈວ່າຄູ່ຮ່ວມພັດທະນາສາມາດຄາດຫວັງຫຍັງໄດ້ກ່ຽວກັບການ ຫຼຸດຜ່ອນຂັ້ນຕອນເຫຼົ່ານີ້ພາຍໃນໂຄງສ້າງຂອງລັດຖະບານໃຫມ່ ແລະກະຊວງການເງິນ ເຊິ່ງຈະຊ່ວຍປັບປຸງຂະບວນການໃນຂະນະທີ່ຮັບປະກັນຄວາມຮັບຜິດຊອບ ແລະການຕິດຕາມກວດກາ. ເພື່ອຍົກສູງປະສິດທິຜົນຂອງຂະບວນການຂອງກອງປະຊຸມໂຕະມົນນັ້ນ ມັນເປັນສິ່ງຈຳເປັນທີ່ຈະສ້າງຄວາມເຂັ້ມແຂງແກ່ລະບົບການຕິດຕາມກວດກາ ແລະ ການປະເມີນຜົນ (M&E) ແລະ ຄວາມສາມາດຂອງສະຖາບັນ, ລວມທັງການເພີ່ມລະດັບພະນັກງານ. ການນຳໃຊ້ຕົວຊີ້ວັດ M&E ທີ່ໄດ້ກຳນົດໄວ້ເປັນຢ່າງລະອຽດຮັດກຸມ ເຊິ່ງສາມາດເກັບກາສະພາບຕົວຈິງທາງດ້ານເສດຖະກິດ ແລະທ່າອ່ຽງທຶນຊ່ວຍເຫຼືອທາງການເພື່ອການພັດທະນາ (ODA) ໄດ້ຢ່າງຖືກຕ້ອງ. ການຮັບປະກັນການສະໜອງງົບປະມານທີ່ເຫມາະສົມເພື່ອສະໜັບສະໜູນລະບົບການຕິດຕາມກວດ ແລະ ປະເມີນຜົນທີ່ມີປະສິດທິພາບ ແລະຄວາມຕ້ອງການພະນັກງານຈະເສີມຂະຫຍາຍຄວາມສາມາດຂອງຂະບວນການໂຕະມົນໃນການຕິດຕາມຄວາມຄືບຫນ້າ

DRAFT

ແລະ ປັບປຸງຍຸດທະສາດຕາມຄວາມຕ້ອງການ. ເວັບໄຊທ໌ ກອງປະຊຸມໂຕະມົນ ຄວນອະນຸຍາດໃຫ້ເຂົ້າເຖິງຂໍ້ມູນທີ່ໂປ່ງໃສ. ພ້ອມນັ້ນ ຄວນຈັດສັນງົບປະມານສຳເພາະບຳລຸງຮັກສາລະບົບການຄຸ້ມຄອງໂຄງການຊ່ວຍເຫຼືອລ້າ (ODA MIS), ສ້າງໃຫ້ມີຄວາມເຂັ້ມແຂງໃນການຕິດຕາມການເຫນັງຕີງຂອງຜູ້ໃຫ້ທຶນຢ່າງມີປະສິດທິພາບ.

**58. ສິ່ງທ້າທາຍດ້ານໂຄງສ້າງ:** ເພື່ອແກ້ໄຂສິ່ງທ້າທາຍດ້ານໂຄງສ້າງພາຍໃນ ຂະບວນໂຕະມົນ ແລະ ຂະແໜງການຍ່ອຍ, ແນະນຳໃຫ້ມີ ຄວາມຍືດຍຸ່ນຫຼາຍຂຶ້ນໃນຂະບວນການບໍລິຫານ ເຊິ່ງສິ່ງຈຳເປັນ. ການປັບປຸງຂັ້ນຕອນການອະນຸມັດໃຫ້ທຶນ ODAs ຈະຊ່ວຍອຳນວຍຄວາມສະດວກໃຫ້ໄວຂຶ້ນໃນການຕອບສະໜອງຄວາມຕ້ອງການດ້ານການພັດທະນາ ແລະ ເພີ່ມປະສິດທິພາບການດຳເນີນງານ. ຄວາມຍືດຍຸ່ນນີ້ສາມາດຊ່ວຍໃຫ້ບັນດາຄູ່ຮ່ວມພັດທະນາ ຈັດການກັບ ຄວາມຊັບຊ້ອນຂອງແຫຼ່ງທຶນ ໃນຂະນະທີ່ຮັບປະກັນວ່າການຈັດສັນຊັບພະຍາກອນຢ່າງມີປະສິດທິຜົນເພື່ອຕອບສະໜອງສິ່ງທ້າທາຍອັນຮີບດ່ວນໃນປະເທດ.

59. ການສົ່ງເສີມການປະສານສົມທົບ ທີ່ມີສ່ວນຮ່ວມ ແມ່ນມີຄວາມສຳຄັນເຊັ່ນກັນ, ແຕ່ຕ້ອງມີຄວາມສົມດູນກັບປະສິດທິພາບການດຳເນີນງານ. ການກຳນົດ ຂົງເຂດທີ່ສາຄັນນັ້ນ ຄາຄິດເຫັນທີ່ມີສ່ວນຮ່ວມ ຈາກຫຼາຍພາກສ່ວນແມ່ນຈຳເປັນທີ່ສຸດຈະຊ່ວຍໃຫ້ຄວາມພະຍາຍາມສຸມໃສ່ບັນຫາທີ່ສຳຄັນທີ່ສຸດ. ການຮັບຮູ້ສະຖານະການທີ່ເຫມາະສົມສຳລັບການການມີສ່ວນຮ່ວມ ຈະຮັບປະກັນວ່າ ຄຳຄິດເຫັນທັງຫມົດແມ່ນໄດ້ຮັບຮູ້ ໂດຍບໍ່ມີການ ແກ່ຍາວຂະບວນການຕັດສິນໃຈແຕ່ຢ່າງໃດ. ວິທີການນີ້ບໍ່ພຽງແຕ່ຈະເຮັດໃຫ້ມີການປຶກສາຫາລືທີ່ມີຄຸນນະພາບ ເທົ່ານັ້ນ, ແຕ່ຍັງສ້າງຄວາມເປັນເຈົ້າການໃນບັນດາພາກສ່ວນກ່ຽວຂ້ອງ, ຊຸກຍູ້ສະພາບແວດລ້ອມການຮ່ວມມືເພື່ອການພັດທະນາ.

**60. ການຈັດຕັ້ງປະຕິບັດຍຸດທະສາດ ທີ່ລິເລີ່ມຮູບແບບການດຳເນີນງານໃໝ່ສຳລັບ ຂະບວນການໂຕະມົນ:** ລັດຖະບານແຫ່ງ ສປປ ລາວ ຕ້ອງໄດ້ວາງແຜນ ແລະ ຈັດຕັ້ງປະຕິບັດຍຸດທະສາດການຜັນຂະຫຍາຍຮູບແບບການດຳເນີນງານໃໝ່ຂອງ ຂະບວນການໂຕະມົນ. ຂະບວນການນີ້ເລີ່ມຕົ້ນດ້ວຍການອະນຸມັດງົບປະມານສຳລັບການປະຕິບັດງານໃນປະຈຸບັນຂອງຄະນະກຳມະການແຫ່ງຊາດ, ດັ່ງທີ່ໄດ້ລະບຸໄວ້ໃນດຳລັດຂອງນາຍົກລັດຖະມົນຕີສະບັບປັບປຸງ. ໄລຍະຕໍ່ໄປຈະປະກອບດ້ວຍການປັບປຸງ ຂະບວນການໂຕະມົນ, ຕົ້ນຕໍແມ່ນສຸມໃສ່ຮູບແບບຂອງກອງປະຊຸມໂຕະມົນ (RTM), ເວທີປາໄສ ແລະກອງປະຊຸມທີ່ກ່ຽວຂ້ອງ, ການປັບປຸງ ແລະ ພາລະບົດບາດຂອງຂະແໜງການ, ຂະບວນການເຮັດວຽກຂອງກອງເລຂາແຫ່ງຊາດສຳລັບ ກອງປະຊຸມໂຕະມົນ, ແລະ ການຈັດຕັ້ງປະຕິບັດແຜນດຳເນີນງານຖະແຫຼງການວຽງຈັນ.

61. ນອກຈາກນັ້ນ, ການສ້າງຂີດຄວາມສາມາດພາຍໃນກົມກອງຈະມີຄວາມສຳຄັນຫຼາຍເພື່ອຮັບປະກັນໃຫ້ຮູບແບບການດຳເນີນງານໃໝ່ຖືກຈັດຕັ້ງປະຕິບັດຢ່າງມີປະສິດທິພາບ ແລະ ຍືນຍົງ. ໂດຍການລົງທຶນໃສ່ທັກສະ ແລະ ຄວາມສາມາດຂອງບຸກຄະລາກອນພາຍໃນກົມກອງ ແລະ ສະຖາບັນທີ່ກ່ຽວຂ້ອງ, ລັດຖະບານສາມາດເສີມຂະຫຍາຍປະສິດທິຜົນໂດຍລວມຂອງ ຂະບວນການໂຕະມົນ. ໃນທີ່ສຸດ, ຄວາມພະຍາຍາມເຫຼົ່ານີ້ຈະນຳໄປສູ່ຂອບການຮ່ວມມືດ້ານການພັດທະນາທີ່ມີປະສິດທິຜົນ ແລະ ມີຄວາມຮັບຜິດຊອບ ໃນ ສປປ ລາວ, ເພື່ອເຮັດໃຫ້ປະເທດສາມາດແກ້ໄຂສິ່ງທ້າທາຍດ້ານການພັດທະນາໄດ້ດີຂຶ້ນ ແລະ ບັນລຸເປົ້າໝາຍແຫ່ງຊາດຂອງຕົນ.

62. ຂະບວນການໂຕະມົນຕ້ອງພັດທະນາໄປ ເໜືອກວ່າບົດບາດ ທີ່ເຄີຍເປັນມາ, ເປັນເວທີປຶກສາຫາລືເພື່ອກາຍເປັນເວທີ ການນຳພາການຈັດຕັ້ງປະຕິບັດ ນຳມາເຊິ່ງຜົນສຳເລັດ ທີ່ສາມາດວັດແທກໄດ້. ການຫັນປ່ຽນນີ້ແມ່ນມີຄວາມສຳຄັນເປັນພິເສດ ເນື່ອງຈາກ ສປປ ລາວ ກ້າວເຂົ້າໃກ້ການຫຼຸດພົ້ນຈາກ ປະເທດດ້ອຍພັດທະນາ ແລະ ປະເຊີນກັບສິ່ງທ້າທາຍດ້ານການພັດທະນາທີ່ສັບສົນຫຼາຍຂຶ້ນ. ຂະບວນການປັບປຸງໃຫມ່ຈະເນັ້ນຫນັກເຖິງການຕິດຕາມຜົນສຳເລັດທີ່ລັກສະນະຍຸດທະສາດໂດຍຜ່ານການຕິດຕາມຢ່າງເປັນລະບົບຕາມເປົ້າຫມາຍສະເພາະທີ່ວາງໄວ້. ການປ່ຽນແປງນີ້ ແມ່ນການແກ້ໄຂ ຈຸດອ່ອນທີ່ລະບຸໄວ້ໃນລະບົບປະຈຸບັນຂອງພວກເຮົາ ທີ່ການປຶກສາຫາລື ມັກຈະບໍ່ສາມາດ ນຳໄປສູ່ການຈັດຕັ້ງປະຕິບັດທີ່ຊັດເຈນ ແລະຄວາມກ້າວຫນ້າທີ່ສາມາດວັດແທກໄດ້.

63. ເພື່ອບັນລຸການຫັນປ່ຽນນີ້, ພວກເຮົາຈະສ້າງກອບການຕິດຕາມກວດກາ ແລະການປະເມີນຜົນທີ່ເຂັ້ມແຂງທີ່ຊ່ວຍໃຫ້ ການປຶກສາຫາລື ທາງດ້ານນະໂຍບາຍໂດຍອີງໃສ່ຫຼັກຖານ. ກອບແຜນງານ ການຕິດຕາມກວດກາ ແລະ ປະເມີນຜົນ ນີ້ຈະຕິດຕາມບໍ່ພຽງແຕ່ ຂໍ້ມູນທາງດ້ານການເງິນເທົ່ານັ້ນ, ແຕ່ຍັງຮວມເອົາຜົນສຳເລັດຂອງການພັດທະນານຳອີກ, ແກ້ໄຂຊ່ອງຫວ່າງທີ່ສຳຄັນທີ່ໄດ້ລະບຸໄວ້ໃນການທົບທວນຄືນການປະຕິບັດທີ່ຜ່ານມາ. ການປະເມີນຄວາມຄືບໜ້າຢ່າງເປັນປົກກະຕິຕໍ່ກັບຄຳໝັ້ນສັນຍາຈະຮັບປະກັນຄວາມຮັບຜິດຊອບ ແລະ ສາມາດປັບຕົວໃຫ້ທັນເວລາເມື່ອຈຳເປັນ. ວິທີການນີ້ ແມ່ນເປັນການແກ້ໄຂບັນດາ ສິ່ງທ້າທາຍຂອງ ຕາມການປຶກສາຫາລືທາງດ້ານນະໂຍບາຍ ເຊິ່ງເປັນບັນຫາທີ່ຍັງຄົງຄ້າງໃນການຮ່ວມມືດ້ານການພັດທະນາຂອງພວກເຮົາ.

64. ຂະບວນການໂຕະມົນທີ່ໄດ້ຮັບການປັບປຸງໃໝ່ຕ້ອງໄດ້ຮັບເອົາວິທີ ທີ່ຮັດກຸມ ໃນການສະໜອງທຶນເພື່ອການພັດທະນາທີ່ຍຶດໝັ້ນໃນ ຂອບແຜນງານ ການເງິນແຫ່ງຊາດແບບເຊື່ອມສານ (INFF) ແລະ ສອດຄ່ອງກັບບຸລິມະສິດດ້ານນະໂຍບາຍທີ່ພົ້ນເດັ່ນຂອງແຜນຍຸດທະສາດການເງິນຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ 10. ນີ້ປະກອບມີ:

**ການຮ່ວມມືພັດທະນາແບບດັ້ງເດີມ:**

- ການຊ່ວຍເຫຼືອດ້ານການພັດທະນາຢ່າງເປັນທາງການ (ODA) ຈາກຄູ່ຮ່ວມມືສອງຝ່າຍ ແລະ ຫຼາຍຝ່າຍ;
- ການຮ່ວມມືດ້ານວິຊາການ ແລະ ການສະຫນັບສະຫນູນການພັດທະນາຄວາມສາມາດ;
- ການຊ່ວຍເຫຼືອດ້ານສັງຄົມ ແລະປະຊາກອນທີ່ມີຄວາມສ່ຽງ.

**ຄູ່ຮ່ວມພັດທະນາທີ່ກຳລັງພົ້ນເດັ່ນ:**

- ຂໍ້ລິເລີ່ມການຮ່ວມມືໃຕ້-ໃຕ້ (ບັນດາປະເທດທີ່ກຳລັງພັດທະນາດ້ວຍກັນ);
- ການຮ່ວມມືສາມຫຼ່ຽມ;
- ກົນໄກການພັດທະນາພາກພື້ນ ໂດຍສະເພາະໃນຂອບອາຊຽນ;
- ກອງທຶນການເງິນດ້ານ ດິນຟ້າອາກາດ ແລະ ສິ່ງແວດລ້ອມ.

**ການມີສ່ວນຮ່ວມຂອງພາກເອກະຊົນ:**

- ການລົງທຶນໂດຍກົງຈາກຕ່າງປະເທດ (FDI);
- ຫຸ້ນສ່ວນພາກລັດ-ເອກະຊົນ (PPPs);

DRAFT

- ຂໍ້ລິເລີ່ມການພັດທະນາພາກເອກະຊົນ;
- ກົນໄກການເງິນແບບເຊື່ອມສານ.

**ການລະດົມຊັບພະຍາກອນພາຍໃນ:**

- ການເພີ່ມລາຍຮັບອາກອນ;
- ລາຍຮັບທີ່ບໍ່ແມ່ນພາສີ;
- ການຄຸ້ມຄອງໜີ້ສິນສາທາລະນະ;
- ການປະຕິຮູບລັດວິສາຫະກິດ.

**ກົນໄກການເງິນທາງເລືອກ:**

- ພັນທະບັດສີຂຽວ ແລະ ການເງິນຄາບອນ;
- ການລິເລີ່ມດ້ານການເງິນດິຈິຕອນ;
- ການລົງທຶນ ທີ່ມີຜົນໄດ້ຮັບສູງ;
- ພັນທະບັດການພັດທະນາແບບຍືນຍົງ.

65. ຂອບເຂດທີ່ກວ້າງອອກດັ່ງກ່າວ ທີ່ໄດ້ຢູ່ໃນຖະແຫຼງການສະບັບນີ້ ສະທ້ອນໃຫ້ເຫັນເຖິງຄວາມເປັນຈິງວ່າ ສະພາບແວດລ້ອມ ດ້ານການເງິນເພື່ອການພັດທະນາຂອງ ສປປ ລາວ ໄດ້ ມີຄວາມສັບສົນ ແລະ ຫຼາກຫຼາຍຫຼາຍຂຶ້ນ. ຂະບວນການໂຕະມົນ ຕ້ອງພັດທະນາຢ່າງມີປະສິດທິຜົນເພື່ອປະສານສົມທົບ ແລະ ຕິດຕາມກວດກາບັນດາແຫຼ່ງທຶນດັ່ງກ່າວ, ຮັບປະກັນໃຫ້ສອດຄ່ອງກັບບັນດາບຸລິມະສິດພັດທະນາແຫ່ງຊາດ ແລະ ປະກອບສ່ວນເຂົ້າໃນບັນດາ ເປົ້າໝາຍ ການພັດທະນາແບບຍືນຍົງ. ການຫັນປ່ຽນນີ້ແມ່ນມີຄວາມສຳຄັນເປັນພິເສດເມື່ອພວກເຮົາຫຍັບເຂົ້າໃກ້ການຫຼຸດພົ້ນອອກຈາກປະເທດດ້ອຍພັດທະນາ ແລະຕ້ອງການຄຸ້ມຄອງການຫັນປ່ຽນໃນ ສະພາບແວດລ້ອມທາງດ້ານການເງິນຂອງພວກເຮົາ.

66. ການປະສານ ສົມທົບກັນ ຂອງແຫຼ່ງການເງິນທີ່ຫຼາກຫຼາຍເຫຼົ່ານີ້ ຮຽກຮ້ອງໃຫ້ມີການປັບປຸງລະບົບການຕິດຕາມ ທີ່ຕິດຕາມທັງກະແສການເງິນ ແລະ ຜົນສຳເລັດຂອງການພັດທະນາ, ປັບປຸງກົນໄກຄວາມສອດຄ່ອງ ເພື່ອຮັບປະກັນການສະໜອງທຶນທັງໝົດ ເພື່ອສະໜັບສະໜູນບຸລິມະສິດແຫ່ງຊາດ, ປັບປຸງກອບການຄຸ້ມຄອງຄວາມສ່ຽງສຳລັບຮູບແບບການເງິນທີ່ແຕກຕ່າງກັນ, ການປະສານງານທີ່ດີຂຶ້ນລະຫວ່າງການລົງທຶນຂອງລັດ ແລະ ເອກະຊົນ, ແລະ ກອບແຜນງານທີ່ຈະແຈ້ງໃນການວັດແທກຜົນກະທົບດ້ານການພັດທະນາໃນທົ່ວທຸກປະເພດການເງິນຕ່າງໆ.

67. ຈາກວິທີການທີ່ຮັດກຸມ ສູ່ການ ສະໜອງທາງດ້ານການເງິນ ເພື່ອການພັດທະນາ ຈະຊ່ວຍຮັບປະກັນການຂົນຂວາຍ ແລະ ນຳໃຊ້ຊັບພະຍາກອນໃຫ້ມີປະສິດທິຜົນຍິ່ງຂຶ້ນ, ໃນຂະນະທີ່ຮັກສາໄວ້ ເຊິ່ງເປົ້າໝາຍໄປສູ່ ການພັດທະນາທີ່ຍືນຍົງ ທີ່ມີທັງກາລະໂອກາດ ແລະສິ່ງທ້າທາຍ ໂດຍມາຈາກ ແຫຼ່ງການເງິນທີ່ຫຼາກຫຼາຍ ໃນຂະນະທີ່ ສ້າງຜົນຜະໂຫຍດໂດຍລວມ ຕໍ່ບັນດາເປົ້າໝາຍການພັດທະນາແຫ່ງຊາດ.

IV. ການລົງນາມ

ລົງນາມໃນກອງປະຊຸມໂຕະມົນລະດັບສູງ ຄັ້ງທີ 14, ວັນທີ 19 ພະຈິກ 2025, ທີ່ນະຄອນຫຼວງວຽງຈັນ, ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ.

ຕາງໜ້າລັດຖະບານແຫ່ງ ສ ປປ ລາວ ແລະ ຕາງໜ້າຄູ່ຮ່ວມພັດທະນາ

ຕາງໜ້າລັດຖະບານແຫ່ງ ສ ປປ ລາວ

______________________________

ພະນະທ່ານ ອານຸພາບ ວົງໜໍ່ແກ້ວ
ຮອງລັດຖະມົນຕີ ກະຊວງການຕ່າງປະເທດ

ຕາງໜ້າຄູ່ຮ່ວມພັດທະນາ

______________________________

ທ່ານ ບາໂຄເດຍ ເບີຄານອຟ
ຜູ້ປະສານງານ ອົງການສະຫະປະຊາຊາດ ປະຈຳ ສ ປປ ລາວ

DRAFT